ປະຫວັດ
ວັດອິນແປງມະຫາວິຫານ
ພະເຈົ້າໃຫຍ່ ແລະ ອະພິນິຫານ

INHPENG TEMPLE

ປະຫວັດ

ວັດອິນແປງມະຫາວິຫານ

ພະເຈົ້າໃຫຍ່ ແລະ ອະພິນິຫານ

ທຳ ໄຊຍະສິດເສນາ



ພຣະເຈົ້າໃຫຍ່ ວັດອິນແປງ

ຫາກກຸສົນໃດຈະເກີດຈາກຫນັງສືເຫຼັ້ມນີ້ ຜູ້ຂຽນຂໍອຸທິດທອດ
ເຖິງດວງວິນຍານຂອງຜູ້ບັງເກີດເກົ້າພໍ່ແມ່ ແລະຜູ້
ທີ່ມີອຸປະກາລະຄຸນທຸກທ່ານ.

ທໍາ ໄຊຍະສິດເສນາ

ຄຳກ່າວຂອງຜູ້ພິມເຜີຍແຜ່

ໜັງສືເຫຼັ້ມນີ້ ເປັນເອກະສານສະບັບແລກ ແລະ ສະບັບດຽວທີ່ກ່ຽວກັບປະຫວັດ ວັດອິນແປງ, ພະເຈົ້າໃຫຍ່ວັດອິນແປງ, ພະເຈົ້າອິນທາທິລາດ ແລະ ຍັງພົວພັນໄປຮອດພະບາງ ພະເຈົ້າໃຫຍ່ວັດອົງຕື້ ອົງເອກອັນເປັນພະມິ່ງຂວັນຂອງຊາດລາວ.

ໃນທາງປະຫວັດສາດພົງສາວະດານໜັງສືເຫຼັ້ມນີ້ໄດ້ກ່າວເຖິງ ພະເຈົ້າຟ້າງູ່ມ, ພະເຈົ້າໄຊເສດຖາມະຫາຣາຊ, ກະສັດອົງເຣືອງນາມສອງພະອົງ ຂອງຣາຊຕະກູນແຫ່ງອານາຈັກລ້ານຊ້າງ.

ເຫັນໄດ້ວ່າມັນແມ່ນສະເໜີຫຼັກຖານຂໍ້ມູນສຳຄັນອີກຫຼາຍຢ່າງທີ່ກ່ຽວກັບພຸທະສາດສະໜາ (ທາງເຂົ້າຂອງພຸດທະສາດສະໜາອີກທາງໜຶ່ງທີ່ເຂົ້າມາສູ່ຣາຊອານາຈັກລາວ) ແລະ ກ່ຽວກັບບູຮານະວັດຖຸ ແລະ ເຊື້ອກະສັດຂອງລາວທີ່ຄວນພິມເຜີຍແຜ່ໄວ້ເປັນສາຣະໃຫ້ໄດ້ອ່ານປະດັບຄວາມຮູ້ແກ່ຜູ້ສົນໃຈ ແລະນັກວິໄຈຄົ້ນຄວ້າຕໍ່ໄປ.

ປະການໜຶ່ງຜູ້ຂຽນໄດ້ຫາທາງແປເປັນພາສາອັງກິດ ເພື່ອໃຫ້ຜູ້ຮູ້ພາສາອັງກິດໄດ້ອ່ານເຂົ້າໃຈ. ເປັນການເປີດໂອກາດອັນກ້ວາງ

ໄກໃຫ້ແກ່ການເຜີຍແຜ່ເປັນຢ່າງດີ ແລະ ເປັນການປ້ອງກັນບໍ່ໃຫ້ສິ່ງລະອັນພັນລະນ້ອຍທີ່ເລົ່າກັນມາດ້ວຍປາກເປົ່ານັ້ນສູນຫາຍໄປ.

ຫວັງວ່າໜັງສືເຫຼັ້ມນີ້ຈະມີປະໂຫຍດບໍ່ນ້ອຍ.

ວັນທີ 12 ຕຸລາ 1992.

ຜູ້ພິມເຜີຍແຜ່

ຄະນະອຸປະຖຳການຈັດພິມ
ມີບັນຊີລາຍຊື່ທ້າຍ

<u>ຄຳນຳ</u>

ຈັນທະບູລີສີສັດຕະນາຄະນາຫູດ (ຣາຊະທານີຂອງຈອມຣາຊາພະຍານາຄ); ວຽງຈັນລ້ານຊ້າງ (ມະຫານະຄອນທີ່ມີອຳນາດອິດທິລິດເຂັ້ມແຂງກ້າແກ່ນທີ່ກັບຊ້າງລ້ານໂຕ) ຫຼື (ມະຫານະຄອນທີ່ມີກອງທັບຊ້າງລ້ານໂຕ).

ຊື່ມະຫານະຄອນ ສອງຊື່ນີ້ຍ່ອມມີຄວາມໝາຍເລິກເຊິ່ງສຳຄັນຝັງຢູ່ໃນດວງໃຈຂອງລາວຜູ້ມີຈິດໃຈຊາດ ຜູ້ຮູ້ສຶກສຳນຶກຊາດບໍ່ລືມ.

ຊື່ສອງຊື່ນີ້ ຍ່ອມຊວນໃຫ້ລຳລຶກນຶກເຖິງອາດີດຂອງຊາດລາວທີ່ຮຸ່ງເຮືອງເຫຼືອງເຫຼື້ອມມີອຳນາດອິດທິພົນແຜ່ໄພສານຢູ່ໃນຂົງເຂດນີ້ຢ່າງປະຕິເສດບໍ່ໄດ້.

ແຕ່ເຫດການຂອງສັງຄົມມະນຸດໄດ້ຜັນແປປ່ຽນປີ້ນ ທັງໃນທາງທີ່ດີ ແລະ ບໍ່ດີ ທັງທີ່ໂຫດຮ້າຍທາລຸນປ່າເຖື່ອນອະມະນຸດ ແສນສາຫັດ ທັງທີ່ລະມຸນລະໄມມີມິດໄມຕຣີ ນີ້ມນວນສຸດສະຫວາດ ຂາດໃຈ ທັງທີ່ຢູ່ພາຍໃນຄອບຄົວສາຍເລືອດດຽວກັນ ທັງທີ່ຢູ່ນອກຄອບຄົວລະຫວ່າງບ້ານໃກ້ເມືອງຄຽງ ...

ພາໃຫ້ລາວສູນເສຍຊອກຊ້ຳຂື້ນຂື່ນທີ່ລະມານ ຢ່າງໃຫຍ່ຫຼວງ ເຫຼືອທີ່ຈະຄະນານັບ.

ປະຈຸບັນລາວມີດິນແດນເຫຼືອພຽງແຕ່ 240000 ກິໂລແມັດຕາ ມີພົນລະເມືອງເຫຼືອພຽງແຕ່ 4.170.000 ຄົນ (1990) ກາຍມາເປັນປະເທດດ້ອຍພັດທະນາທີ່ໜ້າສົມເພດ ແມ້ແຕ່ເອກະສານຫຼັກຖານອັນເປັນມູນມັງທາງປະຫວັດສາດ ພົງສາວະດານ ທາງວັນນະຄະດີ ທາງວັດທະນະທຳ ແລະ ອາລະຍະທຳ ທີ່ເປັນແວ່ນແຍງໃຫ້ເຫັນຄວາມຈະເລີນຮຸ່ງເຮືອງຂອງລາວໃນອາດີດ ກໍຖືກທຳລາຍເຜົາຜານຈົນເກືອບໝົດກ້ຽງ ບໍ່ພຽງພໍສຳລັບຄົ້ນຄວ້າ ສຳຫຼວດຄືນຫາແກ່ນແທ້ຂອງອາລະຍະທຳສີວິໄລຂອງລາວ.

ການກຳເນີດເກີດຂຶ້ນຂອງໜັງສືນ້ອຍເຫຼັ້ມນີ້ ຈຶ່ງອາດຈະຊ່ວຍຟື້ນເອົາຄວາມຊົງຈຳ ເອົາຫຼັກຖານເກົ່າແກ່ກັບຄືນຂຶ້ນ ມາເປັນເອກະສານໄວ້ໃຫ້ຜູ້ສົນໃຈ ໄດ້ອ່ານສຶກສາຄົ້ນຄວ້າວິໄຈ ປຽບທຽບ ແລະ ບັນທຶກຂີດຂຽນສືບຕໍ່ໄປໃຫ້ເປັນມໍລະດົກແກ່ລາວຜູ້ຮັກຊາດ ຜູ້ສຳນຶກຊາດບໍ່ຮູ້ລືມ, ໃຫ້ໄດ້ພົບພໍ້ເພີ່ມພູນຄວາມເປັນປຶກແຜ່ນແກ່ນສານຂອງລາວໃນອາດີດທີ່ມີຄວາມໝາຍ.

ຈຶ່ງຫວັງວ່າໜັງສືເຫຼັ້ມນີ້ຈະມີປະໂຫຍດແກ່ທ່ານຜູ້ອ່ານຕາມສົມຄວນ.

ສຸດທ້າຍຂໍຂອບໃຈນຳຜູ້ແປ ທ້າວ ໂຄດເພດ ອິນທະວົງ ນະ ໜອງຄາຍ ທີ່ໄດ້ອຸທິດເວລາ ແລະ ປັນຍາເພື່ອແປໜັງສືເຫຼັ້ມນີ້ ເປັນພາສາອັງກິດ ໃຫ້ເກີດປະໂຫຍດແກ່ຜູ້ຮູ້ພາສາອັງກິດແຕ່ບໍ່ຮູ້ພາສາລາວ ໄວ້ນະທີ່ນີ້ດ້ວຍ.

ວຽງຈັນ, ວັນທີ 5 ພຶດສະພາ 1989.

ທ. ທຳ ໄຊຍະສິດເສນາ

ວັດອິນແປງ

ພຸດທະສາດສະໜາມີມາໄດ້ 2532 ປີ ວັດອິນແປງ ແມ່ນວັດໜຶ່ງທີ່ສ້າງຂຶ້ນເພື່ອປະໂຫຍດດ້ານຈິດໃຈຂອງສັງຄົມມະນຸດ ແລະ ເພື່ອເປັນສະຖານທີ່ສຶກສິດສຳລັບໃຫ້ ພຣະສັງຄານຸເຖຣະໄດ້ສຶກສາປະຕິບັດທຳມະວິໄນສືບຕໍ່ພຸດທະສາດສະໜາໄວ້ບໍ່ໃຫ້ເສື່ອມສະຫຼາຍ. ແນ່ນອນວັດອິນແປງເກີດລຸນຫຼັງພຸດທະສາດສະໜາ ແຕ່ຈະເກີດປີໃດ ? ຍັງຄົ້ນຫາຫຼັກຖານບໍ່ໄດ້ ຄົງໄດ້ແຕ່ສັນນິຖານປຽບທຽບແລະເອື່ອຍອີງໃສ່ເຫດການສຳຄັນທາງພຸດທະສາດສະໜາ ແລະ ປະຫວັດສາດຂອງຊາດລາວທີ່ຂຽນໄວ້ເປັນລາຍລັກອັກສອນ.

ເຫດການອັນໜຶ່ງ ແມ່ນຫຼັງຈາກພຣະພຸດທະເຈົ້າເຂົ້າສູ່ນິຣະພານແລ້ວ ພຣະບໍຣົມສາຣີຣິກະທາດຂອງພຣະອົງຖືກອັນເຊີນມາສະຖິດສະຖານໄວ້ຍັງຫົວເມືອງໃນຊົມພູທະວີບຫຼາຍຫົວເມືອງ. ໃນນັ້ນ ຂໍຍົກເອົາແຕ່ເມືອງວຽງຈັນມາອ້າງ (ເວລານັ້ນຍັງບໍ່ຊື່ວ່າວຽງຈັນ ແລະ ຍັງບໍ່ເປັນນະຄອນຫຼວງ) ເວລາພະອໍຣະຫັນນຳ ພຣະບໍຣົມສາຣີຣິກະທາດມານົມພີທີ່ສ່ຽງເລືອກ ສະຖານທີ່ຕັ້ງມາຕາມເສັ້ນທາງ ເມື່ອມາເລືອກໄດ້ແຫ່ງນັ້ນແລ້ວຈຶ່ງໄດ້ສ້າງພຣະທາດເຈດີກວມໄວ້. ລຸນຫຼັງມາມະຫາຊົນທີ່ຫຼັ່ງໄຫຼມານອບນະມັດສະການ ຈຶ່ງໄດ້

ສ້າງພູມລຳເນົາຂຶ້ນເປັນທານີຊື່ວ່າ : ເມືອງວຽງຈັນ. (ເທົ່າຮອດສະໄໝພຣະເຈົ້າໄຊເສດຖາມະຫາຣາຊ ເມືອງວຽງຈັນ ຈຶ່ງສະຖາປານາຂຶ້ນເປັນນະຄອນຫຼວງຂອງພຣະຣາຊອານາຈັກລາວ).

ບັນທຶກທາງພຸດທະສາດສະໜາກ່າວວ່າ ພຣະບໍຣົມສາຣີຣິກະທາດທີ່ນຳມາໄວ້ຍັງນະຄອນຫຼວງວຽງຈັນນັ້ນ, ແມ່ນໄດ້ນຳມາຮອດໃນພຸດທະສັກຣາຊ 236 ກ່ອນຄິດຕະສັກກະຣາດ 307 ປີ.

ນັບແຕ່ນັ້ນເປັນຕົ້ນມາພຸດທະສາດສະໜາ ຈຶ່ງໄດ້ແຜ່ຂະຫຍາຍກ້ວາງຂວາງອອກສູ່ທຸກສາຣະທິດໃນພູມີພາກສ່ວນນີ້. ວັດວາອາຣາມພຸດທະສະຖານຕ່າງໆກໍກຳເນີດເກີດຂຶ້ນ ສຳລັບວັດອິນແປງກໍອາດຈະເກີດຂຶ້ນໃນຊ່ວງໄລຍະຫຼັງຈາກນີ້ : ພ.ສ 236 ຈະແມ່ນໃນປີໃດຍັງບໍ່ແຈ້ງແນ່.

ເຫດການອັນສຳຄັນທາງປະຫວັດສາດຊາດລາວ ຕອນໜຶ່ງທີ່ຄວນອ້າງອີງກໍຄື ຍຸກສະໄໝຂອງພຣະເຈົ້າຟ້າງຸ່ມມະຫາຣາຊທີ່ໄດ້ນຳພຸດທະສາດສະໜາຈາກປະເທດຂະເໝນ ເຂົ້າມາສູ່ປະເທດລາວ. ຫຼັງຈາກທີ່ພຣະອົງໄດ້ນຳກອງທັບ, ທີ່ໄດ້ຮັບຄວາມຊ່ອຍເຫຼືອຈາກພໍ່ເຖົ້າ, ຊຶ່ງເປັນກະສັດຂອງກຸງພະນົມເປັນ, ກໍທາເຂົ້າມາຕີຫົວເມືອງຕ່າງໆ ໃນແຜ່ນດິນລາວ, ຊຶ່ງກຳລັງແຕກແຍກກັນຢູ່ນັ້ນ, ລວບລວມເຂົ້າເປັນປຶກແຜ່ນແຄນດຽວໄດ້ສຳເລັດແລ້ວ, ພຣະອົງ

ໄດ້ແຕ່ງເສນາອຳມາດຣາຊບັນດິດໄປສຶກສາຄົ້ນຄວ້າພຸດທະສາດສະໜາຢູ່ທີ່ຫຼວງພະນົມເປັນ, ແລ້ວນຳເອົາພຸດທະສາດສະໜາເຂົ້າມາເປັນຣົ່ມໂພຣົ່ມໄຊໃຫ້ຄວາມຣົ່ມເຢັນເປັນສຸກແກ່ປະຊາຊົນລາວ ທົ່ວທັງປະເທດທາງໜຶ່ງ. (ພຣະພຸດທະສາດສະໜາໄດ້ເຂົ້າມາສູ່ລາວທາງດ້ານປະເທດພະມ້າອີກທາງໜຶ່ງ) ລວມເປັນສອງທາງ.

ປະການໜຶ່ງເພື່ອຈະໄດ້ມິ່ງຂວັນອັນມີຄ່າປະເສີດເລີດລ້ຳຂອງພຸດທະສາດສະໜາເຂົ້າມາໄວ້ຍັງຣາຊທານີຂອງລາວ ພຣະອົງໄດ້ຂໍເອົາພຣະບາງອັນເປັນຄຳແທ້ທັງແທ່ງ ແລະ ເປັນຂອງມິ່ງບ້ານມິ່ງເມືອງຂອງກະສັດຂະເໝນເຂົ້າມາສັກກະຣະບູຊາຢູ່ນະປະເທດລາວ. ພໍ່ເຖົ້າກໍໄດ້ພຣະຣາຊທານໃຫ້ລູກເຂີຍຕາມປະສົງ.

ຮອດບ່ອນນີ້ຂໍໄຂຄວາມໄວ້ນ້ອຍໜຶ່ງ ເພື່ອທວນຄືນເຖິງຂໍ້ມູນຄວາມຈິງພື້ນຖານທີ່ໄດ້ຜູກມັດຮັດຮຶງສຳພັນທະໄມຕຣີອັນແນບແໜ້ນເຖິງຂື້ນເປັນຄອບຄົວດຽວກັນລະຫວ່າງປະຊາຊົນລາວ ແລະ ຊາວຂະເໝນສອງຊາດອ້າຍນ້ອງ ແລະ ບໍ່ເຄີຍມີບັນຫາຂັດແຍ່ງ ແຕກແຍກກັນຈັກເທື່ອ ກໍຍ້ອນພຣະເຈົ້າຟ້າງູ່ມມະຫາຣາຊໄດ້ເປັນ ເຂີຍກະສັດຂະເໝນນັ້ນເອງ.

ຄັນເອົາພຣະບາງມາຮອດນະຄອນວຽງຈັນ (ເດີມແມ່ນເມືອງວຽງຄຳ) ພຣະອົງໄດ້ສ້າງຫໍພຣະບາງອັນສວຍສົດງົດງາມຂຶ້ນຢູ່ ທີ່

ວັດອິນແປງ ແລະ ໄດ້ອັນເຊີນພຣະບາງຂຶ້ນສະຖິດສະຖຽນ ໄວ້ຍັງທີ່ພຣະບາງມືສີບມາ. ໃນກາຣະຕໍ່ມາເຖົ້າແກ່ບູຣານຈຶ່ງມີ ສຳນວນພາສາໃຫມ່ຂຶ້ນໃຊ້ວ່າ : " ທີ່ພຣະແກ້ວ ທີ່ພຣະບາງ "(ທີ່ພຣະແກ້ວສຳລັບໄວ້ໃສ່ພຣະແກ້ວ, ທີ່ພຣະບາງໄວ້ໃສ່ພຣະບາງ) ໃນປະຈຸບັນທີ່ພຣະບາງດັ່ງກ່າວໄດ້ປ່ຽນຊື່ມາເປັນ " ທີໄຕຣ "ຕັ້ງຢູ່ຂ້າງສິມວັດອິນແປງ ຕິດກັບຖະຫນົນເສດຖາທິຣາຊ. ທີ່ປ່ຽນຊື່ມາເປັນທີໄຕຣກໍ່ເພາະວ່າບໍ່ມີພຣະບາງຢູ່ໃນຫັ້ນແລ້ວ; ໄດ້ອັນເຊີນພຣະບາງຂຶ້ນໄປໄວ້ຢູ່ນະຄອນຫຼວງພຣະບາງເປັນການຖາວອນ ນັບແຕ່ປີ ພ.ສ. 2019 ເປັນຕົ້ນມາ. ສ່ວນທີ່ພຣະບາງທີ່ກ່າວກໍໃຊ້ ສຳລັບໃສ່ບັນຈຸຄຳພີພຸດທະສາດສະຫນາຊື່ວ່າ : " ພຣະໄຕຣປິດົກ " ແປດຫມື່ນສີ່ພັນພຣະທຳມະຂັນ. ຈຶ່ງຮ້ອງຊື່ທີ່ພຣະບາງໃຫມ່ວ່າ : " ທີໄຕຣ " ມາຣອດກາຣະບັດນີ້ຊຶ່ງຕັດຫຍໍ້ມາຈາກຄຳວ່າ "ໄຕຣປິດົກ " ເຫຼືອສັ້ນໆ ເປັນ " ໄຕຣ " ເປັນ " ທີໄຕຣ ".

ໃນຕຳນານພຣະບາງກ່າວວ່າ ພຣະມະຫາປາສາມັນຕະເຖຣະເຈົ້າ (ຂະເຫມນ) ພ້ອມກັບຄະນະຣາຊທູດໄດ້ອາຣາດທະນາເອົາພຣະບາງຂຶ້ນມາຮອດເຂດເມືອງວຽງຄຳ ພ້ອມກັບຄຳພີພຣະໄຕຣປິດົກ. ໄດ້ທຳພິທີສະຫຼອງສົມໂພດຢູ່ທີ່ດອນຈັນ (ຫາດດອນຈັນ) ຄົບສາມວັນສາມຄືນກ່ອນຈຶ່ງແຫ່ເຂົ້າເມືອງວຽງຄຳ (ພາຍຫຼັງວຽງຄຳ

ໄດ້ປ່ຽນຊື່ມາເປັນວຽງຈັນ ເບິ່ງຄຳອະທິບາຍຕໍ່ໃນຕອນພຣະ ເຈົ້າໄຊເສດຖາ ຍ້າຍນະຄອນຫຼວງມາຕັ້ງທີ່ວຽງຈັນ).ເວລາຈະອັນເຊີນເອົາພຣະບາງຍ້າຍຂຶ້ນໄປເມືອງສີສັດຕະນາກ ຄະນາຫຼູດ (ລາວນົມຍັງບໍ່ທັນຊື່ວ່າເມືອງຫຼວງພຣະບາງ) ເກີດເຫດຂັດຂ້ອງອັນປະຫຼາດຂຶນຄືຫາມພຣະບາງບໍ່ຂຶ້ນ. ເດີມເຄີຍຫາມ 8 ຄົນໄດ້ ຕື່ມໃສ່ 12 ຄົນ 16–18 ຄົນ ກໍ້ຫາມບໍ່ຂຶ້ນ. ບາງຕຳນານກ່າວວ່າ ພະເຈົ້າໄຊຍະຈັກກະພັດ (ພ.ສ. 1982–2023) ໄດ້ອັນເຊີນເອົາພຣະບາງລົງໃສ່ເຮືອທໍຂຶ້ນໄປ. ພໍຮອດແກ້ງຈັນເຮືອລົ້ມ–ພຣະບາງຫາຍໄປແລ້ວສະເດັດມາຢູ່ນະເມືອງວຽງຄຳເອງ. ບັນດານັກປາດອາຈານພາກັນຈັບສະຫຼາກທັກໄມ້ໄຕ່ເບິ່ງ, ໄດ້ຄວາມວ່າອົງພຣະບາງບໍ່ຍອມໄປ ຈະສະຖິດຢູ່ນະເມືອງວຽງຄຳ. ຈຶ່ງໄດ້ສ້າງຫໍພຣະບາງຂຶ້ນໄວ້ທີ່ວັດອິນແປງ.

ການກ່າວເຖິງປະຫວັດສາດຕອນນີ້ ກໍເພື່ອຊີ້ພິສູດວ່າ ວັດອິນແປງໄດ້ສ້າງຂຶ້ນ ແລະ ມີຢູ່ແລ້ວແຕ່ກ່ອນຍຸກສະໄໝ ຂອງພະເຈົ້າຟ້າງຸ່ມ ຊຶ່ງໄດ້ເລີ່ມຕົ້ນແຕ່ ພ.ສ. 1896 (ຄ.ສ 1352)ແລະສິ້ນສຸດລົງໃນ ພ.ສ. 1916 (ຄ.ສ. 1373)ຣາຊການຍາວນານ 21 ປີ. ຫມາຍຄວາມວ່າ ວັດອິນແປງໄດ້ກຳເນີດ ເກີດຂຶ້ນໃນລະຫວ່າງເວລານັບແຕ່ປີພູທສັກຣາດ 236 ຮອດພູທສັກຣາດ

1896 ກ່ອນສະໄໝຣາຊການຂອງພຣະເຈົ້າຟ້າງຸ່ມມະຫາຣາດ. ຈະແມ່ນປີໃດແໜ້ນມີຫຼັກຖານປະກົດຊັດ.

ພະເຈົ້າໃຫຍ່ວັດອິນແປງ

ອະພິນິຫານທີ່ອັດສະຈັນ

ຕອນນີ້ຈະພັນລະນາເຖິງການສ້າງພຣະເຈົ້າໃຫຍ່ ພຣະເຈົ້າຫຼວງວັດອິນແປງ. ໃນອະດີດຕະການ, ນະສະຖານທີ່ແຫ່ງນີ້, ທີ່ເອີ້ນວ່າຊຸ້ມອິນແປງ ປະຊາຊົນໄດ້ມາຕັ້ງຖິ່ນຖານທຳມາຫາກິນລວມກັນນັບມື້ນັບຫຼາຍຂຶ້ນ ເກີດເປັນຊຸມຊົນອຸດົມຮັ່ງມີ. ເມື່ອມີຊຸມຊົນຢູ່ບ່ອນໃດບັນຫາສັງຄົມຂອງມະນຸດກໍເກີດຂຶ້ນຕາມມາຢູ່ນະແຫ່ງນັ້ນ.

ໃນທີ່ນີ້ຈະກ່າວແຕ່ບັນຫາຄວາມຕ້ອງການດ້ານອາຫານຈິດ ຊຶ່ງອັນໜຶ່ງນັ້ນກໍຄືຄວາມເຊື່ອຖືສາດສະໜາອັນພາໃຫ້ໄດ້ມາຊຶ່ງຄວາມຊຸ່ມຊື່ນຍິນດີ ຄວາມພໍໃຈ ຄວາມດີໃຈ ຕະຫຼອດຮອດຄວາມຮູ້ຄວາມສະຫວ່າງສະໄຫວ, ທີ່ໃຊ້ເສັ້ນທາງເປັນຫຼັກສະມະຄະຕິ ແກ່ການດຳເນີນຊີວິດໃນທາງທີ່ຖືກທີ່ຊອບຮຸ່ງເຮືອງເຫຼືອງເຫຼື້ອມ ແລະ ອື່ນໆ ອີກຫຼາຍອັນພັນເລື່ອງ. ທັງໝົດນີ້ລວມກັນເປັນອາຫານຈິດ ຄອຍບຳລຸງຊຸບລ້ຽງຊີວິດຈິດໃຈ, ຮ່າງກາຍຂອງມະນຸດໃຫ້ມີຄວາມໝາຍ

ມີຄວາມຫວັງເປັນທີ່ຕັ້ງໃຫ້ມີພະລັງ ເພື່ອທຳປະໂຫຍດແກ່ສັງຄົມມະນຸດລວມກັນຕໍ່ໄປ ແລະ ແກ່ຕົນເອງດ້ວຍ.

ອາຫານຈິດຂອງຄົນລາວໄດ້ຈາກພຸດທະສາດສະໜາເປັນສ່ວນສຳຄັນ ຈຶ່ງພາກັນເຊື່ອຖື ແລະ ນັບຖືພຸດທະສາດສະໜາ ເປັນຫຼັກນຳພາໃຫ້ມີສູນລວມຊຸມນຸມເພື່ອປະກອບກິດຈະກຳທາງສາດສະໜາໃຫ້ໄດ້ຮັບປະໂຫຍດຈາກພຸດທະສາດສະໜາ. ສູນລວມນັ້ນຄືວັດ ວັດຈະໃຫຍ່ໂຕມະໂຫລານສວຍສົດງົດງາມວິຈິດພິດສະດານຂຶ້ນຢູ່ກັບກຳລັງຄວາມເຊື່ອຖືສັດທາຂອງຜູ້ສ້າງ ຂອງພະລັງຄວາມອຸດົມຮັ່ງມີຂອງປະຊາຊົນຜູ້ອຸທິດເປັນທານ.

ສິມວັດອິນແປງຍ່ອມເປັນສັກຂີພິຍານພິສູດໃນຂໍ້ທີ່ກ່າວເທິງນີ້. ຂະໜາດຂອງສິມໃຫຍ່ໂຕກວ່າສິມວັດອື່ນໃນນະຄອນແຫ່ງນີ້. ຖານສິມ ເສົາສິມໃຫຍ່ໂຕແຂງແຮງໝັ້ນທານ ກໍ່ສ້າງດ້ວຍຫີນສີລາແລງ (ຫີນແລງ) ເປັນທີ່ໜ້າເຊື່ອຖືສັດທາໃນທາງສິລະປະສະຖາປັດຕະຍະກຳ.

ຄັນແລ້ວນາຍຊ່າງກໍ່ສ້າງຜູ້ຊຳນານກໍໄດ້ລົງມືສ້າງອົງພຣະເຈົ້າໃຫຍ່ຂຶ້ນເທິງແທ່ນອັນມີຊວດຊົງສົມສ່ວນງາມດີ ບໍ່ຕ່ຳ ບໍ່ສູງ ພໍດີຮັບກັບພຣະເຈົ້າໃຫຍ່.

ການກໍ່ສ້າງດຳເນີນໄປດ້ວຍຄວາມປານີດ ພາກພຽນຈົນຮອດ

ບ່າໄຫຼ່ ແລະ ຊວງອື່ນບ່ອນຈະຕັ້ງຄໍຕ້ອນຫາຫິວ. ຄັນແລ້ວບັນດາ ຊ່າງກໍພັກເຊົາເພາະຈະເຂົ້າສູ່ຣາຕຣີການ (ຄ່ຳຕາເວັນຈະຕົກ).

ຕອນນີ້ຜູ້ຂຽນຂໍອິດຈະມາຕາມຄຳບອກເລົ່າກ່າວຂານ ສືບຕໍ່ກັນ ມາຈາກປູ່ຍ່າຕາຍາຍຫຼາຍຊົ່ວໂຄດຄົນມາແລ້ວ ເພື່ອບໍ່ໃຫ້ຄຳບອກ ເລົ່ານັ້ນເຊື່ອມຫາຍຕາຍໄປຈາກຄວາມຊົງຈຳ. ໂດຍສະເພາະຢ່າງ ຍິ່ງການສັງພຣະເຈົ້າໃຫຍ່ໃນຂື້ນຕໍ່ຈາກນັ້ນເປັນຄ້າຍຄືເທພນິຍາຍ ອັນໜ້າອັສຈັນງຶດງໍ້ດ້ວນ :

ຄັນຕົກຄ່ຳມາໃນວັນນັ້ນ ເກີດມີຫົວພະຂາວສາມຕົນເຂົ້າ ມາ ຍັງບ້ານບໍ່ຮູ້ວ່າມາຈາກແຫ່ງຫົນໃດ ເຖົ້າແກ່ອາວຸໂສ ຊາວບ້ານໄດ້ ນະມັດສະການຕ້ອນຮັບເປັນຢ່າງດີ. ພະຂາວອົງໜຶ່ງຖາມຂຶ້ນວ່າ: ພວກອາດຕະມາຮູ້ຂ່າວວ່າອອກຕົນຍາດໂຍມກຳລັງສັດຫາສາງພຣະ ເຈົ້າໃຫຍ່ຂຶ້ນອົງໜຶ່ງ ອາຕະມາຂໍອະນຸໂມທະນານຳເປັນອັນມາກ. ແຕ່ກໍຍັງບໍ່ສຸດໃຈ. ຈິດໃຈແມ່ນຢາກເປັນຊ່າງຊ່ອຍສ້າງ ພຣະເຈົ້າ ອົງນີ້ໃຫ້ສຳເລັດເສັດສົມ. ພວກອອກຕົນຍາດໂຍມຍິນດີຈະໃຫ້ພວກ ອາຕະມາຮ່ວມໃນການກູສົມຍິ່ງໃຫຍ່ຄັ້ງນີ້ບໍ ? ອອກຕົນຍາດໂຍມ ພາກັນຕົກສະເງີ້ປະຫຼາດໃຈ ຊິບຊັບໃສ່ຫູກັນແຊວຊ້ອງ ເພາະບໍ່ນຶກ ບໍ່ຝັນວ່າຈະປະສົບພົບເຫັນເຫດການດັ່ງນີ້.

ໃນທີ່ສຸດເຖົ້າແກ່ອາວຸໂສກໍພາກັນຕອບເປັນສຽງດຽວກັນວ່າ :

ຍິນດີ! ຍິນດີ! ເຕັມອົກເຕັມໃຈແລ້ວ! ຂໍໃຫ້ອົງພຣະຂາວທັງສາມ ຕົນຈົ່ງໄດ້ຣ່ວມໃນການກຸສົນຖ້ວນ ໂດຍບໍ່ແຄ້ວຄາດເຖິງ.

ຕື່ນເຊົ້າຂອງວັນໃຫມ່ຫຼັງຈາກສົມຈັ່ງຫັ້ນແລ້ວ ພຣະຂາວທັງສາມອົງກໍລົງມືສ້າງພຣະເຈົ້າຢ່າງບໍ່ລໍຊ້າ, ສ້າງຄໍ ສ້າງໃບຫນ້າ ໃບຫູ ສ້າງສຽມ ສ້າງເກດຕາມລຳດັບຈົນແລ້ວເສັດສັບລຽບ ຮ້ອຍພາຍໃນສາມວັນ. ເຖົ້າແກ່ປະຊາຊົນພາກັນຕະລຶງພຶງພົດຊື່ນອົກຊື່ນໃຈ ແຊ່ຊ້ອງສໍຣະເສີນຈົນບໍ່ມີອັນໃດຈະເວົ້າຫາບ່ອນຕິບໍ່ໄດ້. ກົງກັນຂ້າມມີແຕ່ຊົມ ມີແຕ່ຍ້ອງ ບາງຄົນກໍວ່າ ເບິ່ງໂສມຫນ້າເບິ່ງດວງຕາເພິ່ນແມ້ ໂອຍ! ຊ່າງງາມເອົາສາແທ້ງ ໃບຫນ້າຍິ້ມອ່ອນໆໃບຫນ້າບອກບຸນບາຣະມີໃບຫນ້າດີໃຈບໍ່ຮູ້ຮ້າຍຮັກລູກແພງຫຼານຮັກບ້ານແພງເມືອງ ໃບຫນ້າຮັກແຂກມິດໄມຕຣີປ່ຽນໄປ ດ້ວຍເມດຕາກະຣູນາ ເອື້ອເຟື້ອເພື່ອແຜ່ ເຍືອກເຢັນສະມາທິສູຊົມ ຄ້າຍຄືສຳເລັດສູ່ສວັນນິຣະພານແລ້ວ. ຖ້າຢືນຢູ່ຊ້າງຫນ້າພັດງ ຈະເບິ່ງບໍ່ເຫັນໃບຫູເຫັນແຕ່ຕາງຫູຍ່ອນລົງ ຫນ້າປະຫຼາດໃຈ.

ເບິ່ງແລ້ວຊົມແລ້ວ ຊາງອົມເອີບອ່ອນຊ້ອນໃນດວງຈິດດວງໃຈຮູ້ສຶກຄ້າຍຄືຢູ່ໃຕ້ຣົ່ມໂພຣົ່ມໄຊ ມີບຸນບາຣະມີປົກປ້ອງຄຸ້ມຄອງ ໃຫ້ຢູ່ເຢັນເປັນສຸກ ສະບາຍເນື້ອສະບາຍໃຈ. ຕັນຕັນໄປທັງເນື້ອ ທັງກາຍຕາວງ ນາງ ດ່ວນ.

ທັງພຣະຂາວຜູ້ສາວທັງເຖົ້າແກ່ປະຊາຊົນທຸກທົ່ວໜ້າພາກັນຍິ້ມ
ແຍ້ມແຈ່ມໃສ່ຊຸ່ມຊ່ອງສົມລະເສີນປຣິດາປຣາໂມດ ເຕັມອົກເຕັມໃຈທີ່
ໄດ້ສ້າງກູສົນຖາວອນລວມກັນ.

ຣອດວັນຖ້ວນສີ່ ພຣະຂາວດາວບົດທັງສາມອົງກໍລ້ຳລາຈາກໄປ
ທາງທິດຕາເວັນອອກສ່ຽງໃຕ້ ຄັນໄປຣອດໜອງບົວແຫ່ງໜຶ່ງພຣະ
ຂາວກໍບອກກັບເຖົ້າແກ່ປະຊາຊົນທີ່ຕິດຕາມແຫ່ແຫນໄປສົ່ງນັ້ນໃຫ້ກັບ
ຄືນເສຍ ສິ່ງອາດຕະມາຣອດນີ້ກໍໄດ້ແລ້ວ. ທຸກຄົນຍັງບໍ່ຍອມກັບຈັບ
ຕາຕິດຕາມເບິ່ງພຣະຂາວທີ່ເດີນທາງຕໍ່ໄປ. ຊ້າບໍ່ນານພຣະຂາວ
ທັງສາມອົງກໍລີ້ລັບຕັບຫາຍຈາກສາຍຕາ ເພິ່ນຜະຍອງເປັນຍອງໄຍ
ເມກມອກ, ເລື່ອນລອຍຂຶ້ນສູ່ທ້ອງຟ້າລັບຫາຍໄປ.

ເຖົ້າແກ່ປະຊາຊົນທີ່ເຫັນສະພາບກັບຫູກັບຕາຕົນເອງ ເຊັ່ນນີ້ກໍ
ພ້ອມກັນນັ່ງຄູ້ເຂົ່າລົງສູ່ດິນຍົກມືຂຶ້ນປະນົມໄຫວ້ໂມທະນາສາທຸ ການ
ຕາມກັນ ແລ້ວຄວາມຕົກສະເງ້ຍຕະລຶງພຶງພົດກໍເພີ່ມຂຶ້ນເປັນທະວີຄູນ.

ນັບແຕ່ນັ້ນມາ, ວັດທີ່ສ້າງຂຶ້ນວັດນີ້ຈຶ່ງໄດ້ຊື່ວ່າ : " ວັດອິນ
ແປງ " (ພຣະອິນພຣະພົມ ເທພເຈົ້າເລົ່າເທພາລົງມາສ້າງມາ
ແປງ) ກາຍເປັນວັດສັກສິດເຂັດຢຳ ເປັນທີ່ສັກກະລະບູຊາ ເປັນ
ທີ່ເພິ່ງທີ່ພຶ່ງ ເປັນຮົ່ມໂພຮົ່ມໄຊແກ່ຈິດໃຈໄພ່ຟ້າປະຊາກອນຕະຫຼອດ
ມາ.

ໜອງບົວບ່ອນພຣະຂາວທັງສາມອົງເພິ່ນພະຍອງຂຶ້ນສູ່ຟ້າຫາຍລັບໄປນັ້ນກໍໄດ້ຊື່ແໝນມາວ່າ : "ບົວພະຫຍອງ" ການເວລາຜ່ານມາຫຼາຍກວ່າພັນປີຄຳວ່າພະຫຍອງກໍໄດ້ປ່ຽນມາເປັນ "ຂະຫຍອງ" ແລ້ວກໍຈຶງເປັນ "ບົວຂະຫຍອງ" ມາຈົນຕາບເທົ່າທຸກວັນນີ້ (ບົວຢູ່ທາງທິດໃຕ້ວຽງຈັນ 2 ຫຼັກກິໂລແມັດ ຕິດກັບທາງໄປທ່າເດື່ອ, ບ້ານທີ່ຢູ່ແຄມບົວນັ້ນກໍໄດ້ຊື່ວ່າ : ບ້ານບົວຂະຫຍອງຈົນຮອດບັດນີ້).

<u>ວັດອິນແປງກ່ຽວພັນເຂົ້າໃນປະຫວັດສາດ ຊາດລາວ</u>

ຕົກຮອດສະໄໝ ພຣະເຈົ້າໄຊເຊດຖາທິຣາຊ ຂຶ້ນຄອງຣາຊສົມບັດແຕ່ປີ ພ.ສ. 2091 ຮອດ 2114 ພຣະອົງໄດ້ຍ້າຍນະຄອນຫຼວງມາຕັ້ງທີ່ວຽງຈັນໃນ ພ.ສ. 2103.

ກ່ອນນັ້ນນະຄອນຫຼວງຂອງລາວຕັ້ງຢູ່ນະຄອນຫຼວງພຣະບາງ.ນະຄອນຫຼວງພຣະບາງເອີ້ນກ່ອນນັ້ນກໍຊື່ວ່າ : ເມືອງຊຽງທອງ" ແລະ ເມືອງສີສັດຕະນາກຄະນາຫຸດ" ຕາມລຳດັບແຕ່ເດີມມາ ຄັນຕົກຮອດສະໄໝເຈົ້າຫຼ້າແສນໄທ ພ.ສ. 2019 ຈຶ່ງໄດ້ລົງມາອັນເຊີນເອົາພຣະບາງຂຶ້ນໄປທາງບົກ ເອົາໄປໄວ້ວັດມະໂນລົມ (ວັດ

ມະໂນຊຽງກາງ) ຮອດປີ ພ.ສ. 2039 ເຈົ້າວິຊຸນນະຣາຊຂຶ້ນຄອງຣາຊ ໄດ້ອາຣາດທະນາເອົາພຣະບາງຈາກວັດມະໂນຣົມ ໄປໄວ້ຍັງວັດວິຊຸນນະຫາວິຫານທີ່ສ້າງຂຶ້ນໃໝ່ໃນປີ ພ.ສ. 2056. ເມືອງຊຽງທອງແຕ່ເກົ່າກ່ອນຈຶ່ງປ່ຽນຊື່ມາເປັນ ນະຄອນຫຼວງພຣະບາງແຕ່ນັ້ນເປັນຕົ້ນມາ ເພາະເຫດວ່າເປັນນະຄອນຫຼວງ ແລະ ມີພຣະບາງສະຖິດສຖຽນເປັນມິ່ງຂວັນບ້ານເມືອງຢູ່ນະທີ່ນີ້.

ສຳລັບວຽງຈັນ, ກ່ອນນີ້ກໍຊື່ວ່າ : ວຽງຄຳ. ຕາມຕຳນານພຣະບາງຕົກຮອດສະໄໝພຣະເຈົ້າໄຊເຊດຖາທິຣາຊ ໄດ້ຍ້າຍນະຄອນຫຼວງຈາກນະຄອນຫຼວງພຣະບາງ ມາສະຖາປະນາເມືອງວຽງຄຳຂຶ້ນເປັນນະຄອນຫຼວງໃໝ່ຕັ້ງຊື່ໃຫ້ໃນເວລານັ້ນວ່າ: ຈັນທະບູລີສີສັດຕະນາກຄະນາຫຸດ ບາງຕຳນານກໍຮ້ອງວ່າ: ຈັນທະບູຣີສີອ່ວຍລ່ວຍ.

ຈາກນັ້ນນັບເວລາຫຼາຍຝາຫຼາຍປີຜ່ານໄປຊື່ຂອງຣາຊທານີເກົ່າກໍປ່ຽນມາເປັນນະຄອນຫຼວງວຽງຈັນຈົນຮອດກາຣະບັດນີ້, ຊຶ່ງແມ່ນທັງການຕັດ ແລະ ປະສົມໃໝ່, ຄືຕັດເອົາວຽງ ອອກຈາກວຽງຄຳ, ຕັດເອົາຈັນອອກຈາກຈັນທະບູລີສີສັດຕະນາກຄະນາຫຸດມາປະສົມເຂົ້າກັນ ເລີຍໄດ້ຄຳໃໝ່ວ່າວຽງຈັນແປວ່ານະຄອນຂອງພະຈັນຫຼີ ທານີທີ່ປະກອບຂຶ້ນຈາກພະຈັນວັນເພັງ - ອ່ານໄດ້ງ່າຍຟັງມ່ວນຫູທັນສະໄໝຕະຫຼອດເວລາ ແລະ ມີຄວາມໝາຍຊຶ້ງຖິງໃຈ.

ບາດນີ້ມາເຂົ້າໃນເລື່ອງຂອງວັດອິນແປງ ກ່ຽວພັນກັບປະຫວັດສາດອີກ ບົນໜຶ່ງ. ວັດອິນແປງມີມາແຕ່ກ່ອນເປິງຂອງພະເຈົ້າຟ້າງຸ່ມມະຫາຣາຊ, ກ່ອນຣາຊການຂອງພຣະເຈົ້າໄຊເຊດຖາມະຫາຣາຊ ຕັ້ງນານແສນນານເປັນປະຖົມບູລົມ.

ຮູ້ກັນແລ້ວວ່າພຣະເຈົ້າໄຊເຊດຖາມະຫາຣາຊ ເປັນກະສັດທີ່ນັບຖືພຸດທະສາດສະໜາແຮງກ້າ ເປັນນັກສະຖາປັດຕະຍະກອນເກັ່ງກາດລືຊາ, ສ້າງພຣະທາດຫຼວງເຈດີ, ວັດວາອາຮາມຈົນນັບບໍ່ຖ້ວນ, ສ້າງພຣະພຸດທະຮູບອົງສັກສິດເຂັດຢຳຈຳນວນຫຼວງຫຼາຍ. ໃນຈຳນວນນີ້ຂໍຍົກເອົາພຣະເຈົ້າໃຫຍ່ວັດອົງຕື້ມາບັນລະຍາຍພໍເປັນສັງເຂບ ເພາະມີສ່ວນກ່ຽວພັນກັບປະຫວັດສາດຂອງຊາດລາວ ຊຶ່ງໃນຕອນນີ້ມີພະມ້າແຊກແຊງເຂົ້າມາໃນປິຕູພູມ.

ທີ່ຈະກ່າວຕໍ່ໄປນີ້, ມີຂຽນໄວ້ໃນໜັງສືພາສາພະມ້າຊື່ວ່າ : " ຄຳການປູ່ນຂາວ " ເປັນໜັງສືປະຫວັດສາດຕອນໜຶ່ງ ຂອງພະມ້າຢູ່ໃນຫໍສະມຸດແຫ່ງຊາດໃນນະຄອນຢ່າງກຸ້ງ.

ພຣະເຈົ້າໄຊເຊດຖາໄດ້ສັ່ງໃຫ້ຕັ້ງຮ້ານທໍບູຊາຂົ້ນ <u>ຢູ່ທີ່ວັດອິນແປງ</u> ເພື່ອຫ້າງຫາທຳການຫຼໍ່ຫຼອມພຣະພຸດທະຮູບທອງສຳຣິດໃຫຍ່ (ພຣະເຈົ້າອົງຕື້ປະຈຸບັນ) ໃນເວລາໜື້ນດານາຍຊ່າງ ນັກປາດ

ຣາຊທູດທ້າວຫາ ປັ້ນຫຸ່ນເຣັດເບົ້າ ຕັ້ງເຕົາຕຽມຈະຕິດເຕົາຫຼໍ່ທອງຢູ່ນັ້ນ ກອງທັບພະມ້າໄດ້ດົ້ນດອນຊອນປ່າເຂົ້າມາປິດລ້ອມ ນະຄອນວຽງຈັນໄວ້ຮອບດ້ານ ແລ້ວໄດ້ແຕ່ງຣາຊທູດຖືສານເຂົ້າມາໃຫ້ພຣະເຈົ້າໄຊເຊດຖາມະຫາຣາຊຢູ່ນະທີ່ໄຊສາລາພິທີໃນວັດອິນແປງ.

ສານນັ້ນ, ແມ່ນສານຍື່ນຄຳຂາດຕໍ່ກະສັດລາວໃຈຄວາມສຳຄັນວ່າ: " 1. ໃຫ້ກຽມຕົວຕີເສິກກັບເຮົາ ເຮົາຢູ່ນະທີ່ລ້ອມວຽງຈັນ ໄດ້ທຸກດ້ານແລ້ວ. 2. ໃຫ້ຍອມມອບຕົວ ແລະ ໃຫ້ເມືອງລາວເປັນເມືອງຂຶ້ນພະມ້າ. ໃຫ້ເລືອກເອົາຢ່າງໜຶ່ງ ".

ຄັນໄດ້ຮັບສານສະບັບນັ້ນ ພຣະເຈົ້າໄຊເຊດຖາທິຣາຊ ກໍຕົກສະເງີ້ປະຫຼາດໃຈຢູ່ພັກໜຶ່ງ ເພາະເປັນເຫດການທີ່ບໍ່ໄດ້ຄາດຄິດ ແລ້ວກໍຈັບສານໄປຍັງພະຣາຊວັງພົບກັບພະມະເຫສີ ປຶກສາຫາລືກັນ ໄດ້ຮັບປັນຍາອັນສະຫຼາດໃສແຈ້ງ, ແລ້ວກໍກັບຄືນໄປຍັງທີ່ໄຊໃຫ້ຄຳຕອບແກ່ຣາຊທູດພະມ້າວ່າ : " ເຮົາກຳລັງສ້າງພຸດທະພູມມະຫາກຸສົນຄັ້ງຍິ່ງໃຫຍ່ຄືຈະຫຼໍ່ຫຼອມພຣະເຈົ້າໃຫຍ່ດ້ວຍທອງສຳຣິດນ້ຳໜັກໜຶ່ງຕື້. ໄດ້ຫາງຫາເຕົາຫຼໍ່ເບົ້າຫຼອມ ເຄື່ອງສັກກະຣະບູຊາ ລຽບຮ້ອຍທຸກຢ່າງແລ້ວຍັງບໍ່ແມ່ນເວລາຈະຕີເສິກ, ແມ່ນເວລາທີ່ຈະທຳບຸນກຸສົນມະຫາສານ ເຮົາຈຶ່ງຂໍເຊີນພວກທ່ານເຂົ້າລວມທຳບຸນກຸສົນຄັ້ງນີ້ດ້ວຍ.

ຣາຊທູດພະມ້າໄດ້ຄຳຕອບກັບໄປລາຍງານໃຫ້ແມ່ທັບພະມ້າຊາບ ແມ່ທັບພະມ້າອະນຸຍາດໃຫ້ຣາຊທູດຂອງຕົນສາມຄົນເຂົ້າລວມທຳພິທີຫຼໍ່ຫຼອມພະເຈົ້າອົງຕື້ຕາມຄຳເຊີນຂອງລາວ.

ຮອດເວລາເທທອງທີ່ປ່ອຍເປັນນ້ຳລົງສູ່ເບົ້າ ພຣະເຈົ້າໄຊເຊດຖາໃຊ້ມືຂອງພຣະອົງຈັບຫມໍ້ຕົ້ມທອງທີ່ແດງຢູ່ນັ້ນ ໂຈມຂຶ້ນເທລົງໃສ່ເບົ້າໄດ້ສາມເບົ້າ. ແລ້ວພຣະອົງກໍເຊີນຣາຊທູດພະມ້າເຂົ້າພິທີກະທຳດັ່ງດຽວກັບເພິ່ນ ທັນທີຣາຊທູດພະມ້າປະຕິເສດ ດ້ວຍຄວາມສະເງີ້ຢ້ານກົວເພາະເຮັດບໍ່ໄດ້ ໄຟຈະເຜົາມືໄດ້ແຕ່ຍົກມືປະນົມໄຫວ້ພຣະເຈົ້າໄຊເຊດຖາ ຂໍໃຫ້ພຣະອົງເທທອງຕໍ່ໄປຈົນ ແລ້ວເສັດເຖິດ.

ພິທີເທທອງແລ້ວເສັດ ທູດພະມ້າກໍລາກັບໄປລາຍງານ ເຫດການທີ່ແມ່ທັບພະມ້າໂດຍລະອຽດ ພາໃຫ້ພະມ້າຕົກສະເງີ້ ສະທ້ານຢ້ານກົວ ອິດທິຣິດຂອງພຣະເຈົ້າໄຊເຊດຖາ, ພາໃຫ້ເກີດບັນຫາແກ່ພຣະມ້າວ່າ ສົມຄວນຈະຍົກທັບຕີວຽງຈັນ ຫຼື ບໍ່ ?

ຄັນຕົກຄ່ຳມາໃນມື້ນັ້ນ ທະຫານພະມ້າພ້ອມແມ່ທັບນາຍກອງພາກັນນອນຕາມເວລາ. ພຣະເຈົ້າໄຊເຊດຖາທິຣາຊ ພ້ອມດ້ວຍແມ່ທັບນາຍກອງອົງຄະຣັກຊ້າຍ-ຂວາ ເສນາອຳມາດໄດ້ອອກໄປຢ້ຽມທັບພະມ້າທີ່ພັກນອນຢູ່ນອກຊານເມືອງວຽງຈັນ. ພະອົງໄດ້ຣວຍມົນ

ຄາຖາກ່ອມໃຫ້ທະຫານພະມ້ານອນຫຼັບຈົມປ໋ວບໍ່ຮູ້ຕົວ ທະຫານອົງຄະຣັກຂອງພະອົງເຫັນເປັນໂອກາດງາມທີ່ຈະສັງຫານສັດຕູໄດ້ສະບາຍ ກໍພາກັນຖອດດາບອອກຈາກຝັກ ກຽມພ້ອມຈະຟັນຄໍສັງຫານໃຫ້ແຫຼກລານສົມໃຈໜັກ–ພະເຈົ້າໄຊເຊດຖາຫ້າມບໍ່ໃຫ້ກະທຳແກ່ສັດຕູໂດຍເດັດຂາດ ເພາະຈະເສື່ອມກຽດສັກດີ ແລະ ໄຮ້ສິນທຳໃນຍຸດທະສົງຄາມ.

ສະໄໝນັ້ນ, ນິຍົມໃຊ້ເວດມົນກົນຄາຖາເພາະປາກົດຜົນເຫັນທັນຕາທັນໃຈ–ມາສະໄໝນີ້ຮອງວ່າພະລັງຈິດອຳນາດຈິດ ອັນເກີດຈາກການເຝິກຝົນປະຕິບັດຕາມພິທີກຳຕາມແຜນ ທີ່ພາໄປສູ່ຄວາມສຳເລັດໃນການໃຊ້ອຳນາດຈິດ ສາມາດບັນດານໃຫ້ເກີດ ອະພິຫານທີ່ປະຫຼາດໜ້າອັນສະຈັນ.

ພະອົງໄດ້ສັ່ງໃຫ້ໄປເອົາປູນຂາວມາກອຍໃສ່ນ້ຳ ເຮັດເປັນສີຂາວ ແລ້ວໃຊ້ທາໃສ່ຄໍຫອຍຂອງແມ່ທັບພະມ້າຈຳນວນ 7–8 ຄົນ, ຄັນແລ້ວພະອົງກໍພາຂະບວນຖອຍກັບຄືນສູ່ຣາຊທານີ.

ຕື່ນມື້ເຊົ້າ ທະຫານພະມ້າລຸກຈາກນອນເຫັນຄໍຫອຍແມ່ທັບໃຫຍ່ <u>ກ່າມຂາວ</u> ກໍພາກັນຊຸບຊິບຫົວຂວັນທຳນອງຕະຫຼົກຢາກຫົວ. ແມ່ທັບປາກຮ້າຍ, ຖາມຂຶ້ນວ່າຫົວຂວັນຫຍັງ ? ຄຳຕອບກໍ່ວ່າ : ຄືວ່າທາເຂົ້າແປ້ງແຕ່ເດິກແທ້? ຕົວເອງບໍ່ໄດ້ທາເປັນຫຍັງ ຈຶ່ງຄໍຂາວສີ

ສົມກັນໄປມາເລີຍເຫັນຄົນຫອຍແມ່ທັບອີກ 8 ຄົນ, ການຂາວຄືກັນ ນີກ່ວາໝູ່ພວກດຽວກັນປອກເຫຼັ້ນ ເລີຍຮ້ອງດ່າໄປ– ສຽງຕອບໂຕ້ ທັນທີ່ວ່າຕົນບໍ່ໄດ້ທາ, ຖາດັ່ງນັ້ນເປັນຫຍັງຄືຈັ່ງການຂາວ? ໂສເຫຼັ້ນ ກັນໄປມາ ເລີຍມີສຽງໜຶ່ງບອກວ່າ : ມື້ຄືນນີ້ພະເຈົ້າໄຊເຊດ ຖາເຂົ້າມາໃນຄາຍນັ້ນ (ແມ່ນສາຍລັບຂອງລາວປະໄວ້) ພາກັນ ຕົກໃຈຈົ້ງວັ້ນສີສົ້ນຂົນທັນທີ. " ຄໍ່ການປູນຂາວ " ເກີດເປັນປີສນາ ແກ້ບໍ່ອອກ – ຄໍາກ່າວຂານກັນທະວີຂຶ້ນ ແມ່ທັບອາວຸໂສຜູ້ໜຶ່ງເລີຍ ອອກປາກວ່າ : ພະເຈົ້າໄຊເຊດຖາກາເຂົ້າມາໃນຄ້າຍເຮົາແຖມ ຍັງເອົາປູນຂາວການຄໍເຮົາໄດ້ ! ເປັນຫຍັງພະອົງຈຶ່ງບໍ່ຟັນຄໍພວກ ເຮົາ ?.

ໃນທີ່ສຸດພະມ້າກໍສືບຮູ້ຄວາມຈິງທຸກປະການພາກັນປະຫຼາດໃຈ ທັງວິດທັງຄິດຄາລະວະບູຊາຈິດໃຈຂອງພຣະຣາຊາລາວ ຈຶ່ງແຕ່ງ ຣາຊທູດເຂົ້າໄປຖວາຍຄວາມເຄົາລົບໄຕ່ຖາມເອົາຄວາມຈິງ ຈາກ ພະອົງ.

ເມື່ອໄດ້ຮູ້ຄວາມຈິງແທ້ທຸກປະການແລ້ວ ແມ່ທັບໃຫຍ່ພະມ້າຈຶ່ງ ເປັນກະສັດກໍຕັດສິນໃຈເຂົ້າໄປຖວາຍບັງຄົມສະແດງຄວາມເຄົາລົບ ຄາລະວະກະສັດລາວຢ່າງສູດຊຶ້ງ ແລະ ຂໍຜູກມິດໄມຕຣີກັບລາວ.

ໃນລະຫວ່າງການສົນທະນາປາໃສກັນໄປມາຝ່າຍກະສັດພະມ້າ

ໄດ້ຮູ້ວ່າການເຄື່ອນໄຫວ ແລະ ການປະຕິບັດຂອງພະເຈົ້າໄຊເຊດຖານັ້ນແມ່ນເກີດຈາກປັນຍາອັນຊານສະຫຼາດສຸຂຸມຂອງ ພະຣາຊະເທວີຂອງພຣະອົງເປັນຜູ້ຊີ້ທາງໃຫ້.

ກະສັດພະມ້າຍິ່ງທະວີສັດທາເຊື່ອຖື ແລະ ຄາລະວະບູຊາພະຣາຊຸມລາວເປັນຮ້ອຍເທື່ອແສນທີ ຈົນເຖິງຂັ້ນໄດ້ຂໍອະນຸຍາດ ຂົນເອົາຫີນພູມາສ້າງອະນຸສອນໄວ້ເປັນທີ່ລະນຶກ (ຮູບຄົວດດ້ວຍຫີນພູຂອງພະຣາຊຸມອົງນອນຍັງມີຢູ່ດ້ານຫຼັງສິມວັດອິນແປງ ເອື່ອຍຕິດຝາສິມຢູ່ຈົນຮອດບັດນີ້) ຫີນພູທີ່ເຫຼືອຍັງໄດ້ເອົາຄັວດຮູບມອມ (ສິງໂຕ) ສອງຕົວຕັ້ງຢູ່ໜ້າປະຕູເຂົ້າສິມດ້ານໜ້າ ແລະ ຫີນອີກສອງປ່ຽງທີ່ເຫຼືອໃຊ້ກໍຍັງຕັ້ງຢູ່ດ້ານໜ້າສິມເຫັນໄດ້ຈົນຮອດກາຣະບັດນີ້.

ແມ່ນຍຸກສະໄໝໜຶ່ງທີ່ລາວທັງສອງເພດມີປຣີຊາສາມາດສ້າງສັດຕູໃຫ້ກາຍມາເປັນມິດໄດ້ຢ່າງໜ້າອັດສະຈັນ, ສ່ວນພະເຈົ້າໃຫຍ່ອົງຕື້ ເມື່ອຫຼໍ່ຫຼອມຂັດສີໃສ່ງາມແລ້ວພະເຈົ້າໄຊເຊດຖາມະຫາຣາຊກໍໄດ້ສ້າງສິມໃໝ່ໃສ່ ແລະ ເປັນວັດໃຫຍ່ວັດຫຼວງແຕ່ບັດນັ້ນມາ.

ເຫັນໄດ້ວ່າວັດອິນແປງກ່ຽວພັນກັບປະຫວັດສາດຊາດລາວສອງສະໄໝ ຕົ້ນແມ່ນໃນເບື້ອງພະເຈົ້າຟ້າງູ້ມມະຫາຣາຊ ພ.ສ1896 ໄດ້ນໍາເອົາພະບາງຈາກປະເທດຂະເໝນມາໄວ້ວັດອິນແປງ ຊຶ່ງວັດອິນແປງມີຢູ່ກ່ອນແລ້ວຫຼາຍຮ້ອຍປີ ອາດເປັນພັນປີກໍໄດ້. ຖ້າຈະ

ນັບຈາກເວລາທີ່ພະບໍຣົມສາຣີຣິກກະທາດຂອງພຣະພຸດທະອົງໄດ້ສະເດັດເຂົ້າມາຢູ່ໃນພະທາດຫຼວງແຕ່ປີ ພ.ສ. 236 ເປັນຕົ້ນມາຮອດປາງພະເຈົ້າຟ້າງູ່ມກໍເປັນເວລາດົນນານເຖິງ 1660 ປີ – ໃນໄລຍະເວລາ 1660 ປີນັ້ນ, ວັດອິນແປງຈະເກີດຂຶ້ນໃນປີໃດຍັງຫາຫຼັກຖານບໍ່ໄດ້.

ສະໄຫມທີ່ສອງແມ່ນຢູ່ໃນປາງພະເຈົ້າໄຊເຊດຖາມະຫາຣາຊ ພ.ສ. 2105 ທີ່ໄດ້ທຳພິທີພະເຈົ້າໃຫຍ່ອົງຕື້ຢູ່ວັດອິນແປງລຸນຫຼັງຈາກສະໄຫມພະເຈົ້າຟ້າງູ່ມ 209 ປີ, ກະສັດພະມາໄດ້ສ້າງອະນຸສອນຄວັດຫິນພູຂອງພະຣາຊິນລາວໄວ້ທີ່ວັດອິນແປງເປັນຫຼັກຖານ ພິສູດ.

ສະນັ້ນ, ວັດອິນແປງຈຶ່ງເປັນວັດເກົ່າແກ່ຄູ່ບ້ານຄູ່ເມືອງ ມາເປັນເວລານານນັບພັນປີກວ່າ ເປັນວັດສຳຄັນກ່ຽວພັນເຂົ້າ ໃນປະຫວັດສາດຊາດລາວ ເປັນວັດທີ່ເປັນອະນຸສອນແຫ່ງຄວາມຫຼັງອັນຮຸ່ງເຮືອງຂອງຊາດ ເປັນວັດທີ່ສັກສິດເຂັດຢຳ ຄວນຈະໄດ້ຮັບການສັກກະລະບູຊາເຄົາລົບນົບນອບແທ້ຈິງ ຄວນຈະໄດ້ຮັບການຮັກສາບູຣະນະສ້ອມແປງໄວ້ໃຫ້ຄົງຄວາມເປັນທີ່ເຊີດໜ້າຊູຕາ ເປັນທີ່ພັກຜ່ອນຫາຄວາມສະຫງົບໄຮ້ກັງວົນ ເປັນສົມບັດອັນລ້ຳຄ່າຂອງຊາດສືບຕໍ່ໄປບໍຣູສົມສູດ.

<u>ອະພິນິຫານຂອງພະເຈົ້າໃຫຍ່ - ພະເຈົ້າອິນທາທິຣາຊ ສະໄໝເສິກຫໍ້</u>

ປູ່ຍ່າຕາຍາຍເລົ່າສືບກັນມາວ່າ : ເວລາພວກທະຫານຫໍ້ ຍົກທັບເຂົ້າມາລົບລາຂ້າຟັນຕີປຸ້ນເອົາສິນບັດເງິນທອງຢູ່ທີ່ນະຄອນວຽງຈັນນັ້ນ, ເອົາໃຊ້ເຫຼັກເອົາຄວາຍເຂົ້າຈັບຂຸດເຈາະ ແທ່ນພະເຈົ້າໃຫຍ່ ລວມທັງກາງຫົວອົງພະເຈົ້າໃຫຍ່ວັດອິນແປງ. ທັນໃດນັ້ນ ພວກໂຈນ 10 ກວ່າຄົນເກີດປວດຫົວມົວເກົ້າວິນວຽນ ລົ້ມພູບລົ້ມພາບ ຣາກລົມຣາກແລງກະຟູບກະຟາບລອຍບົກໜີອອກຈາກສິມໄປ ພໍໄປຣອດຫຼັກຕາຍຣົ້ວວັດ ພວກມັນກໍວິນສະຣະບາດລົ້ມຕາຍລົງ ທັງໝົດ.

<u>ສະໄໝກ່ອນລັດຖະປະຫານກອງແລ ປີ 1960</u>

ພຣະເຈົ້າອິນທາທິຣາຊອົງຢູ່ໃນຊຸບມຸງຂ້າງຫຼັງສິມ ບັງເກີດອະພິນິຫານອອກເຫື່ອໄຫຼໄຄຍອຍຢ່າງໜ້າອັດສະຈັນ ປະຊາຊົນຊາວລາວ ແລະ ຕ່າງປະເທດມີ ຈີນ ແລະ ຫວຽດນາມ ຕ່າງພາກັນເອົາຟ້າຍສຳລີ ແລະ ຜ້າຂາວໄປຈັບເຊັດເອົານ້ຳເຫື່ອນັ້ນໄປບູຊາສັກກະຣະຢູ່ເຮືອນຕົນ ຕໍ່ຈາກນັ້ນມາສອງເດືອນກໍເກີດ ລັດຖະປະຫານກອງແລ. ສະພາບການບ້ານເມືອງປັ່ນປ່ວນໄປທຸກແຫ່ງຫົນປະ

ຊາວຈີນເດືອດຮ້ອນລົ້ມຕາຍໃນການສູ້ລົບກັນດ້ວຍອາວຸດ ລູກປືນໃຫຍ່ຫຼາຍລູກໄດ້ຕົກມາໃສ່ວັດອິນແປງ ແຕ່ບໍ່ແຕກບໍ່ມີໄພອັນຕະລາຍ ຄັນໄປຕົກໃສ່ເຮືອນປະຊາຊົນເກີດລະເບີດໄຟໄຫມ້ເຊັ່ນ ເຮືອນແມ່ຕູ້ເບົ້າ, ເຮືອນແມ່ຕູ້ຕອງ ... ຖືກລະເບີດໄຟໄຫມ້ຫມົດ.

ການປັບປຸງກໍ່ສ້າງບູລະນະຂຶ້ນໃຫມ່

ການປັບປຸງກໍ່ສ້າງບູລະນະພະເຈົ້າໃຫຍ່ ແລະ ສິມຂຶ້ນໃຫມ່ໄດ້ດຳເນີນມາເລື້ອຍຕິດຕໍ່ກັນຕາມກຳລັງເງິນ ແລະ ວັດຖຸກໍ່ສ້າງທີ່ຫາໄດ້ ໂດຍມີກຳມະການຮັບຜິດຊອບຫຼາຍຄະນະສືບຕໍ່ຄວບຄຸມ.

ໃນທີ່ນີ້, ຈະຂໍອ້າງແຕ່ໄລຍະຫຼັງຕັ້ງຕົ້ນແຕ່ປີ 1965 ເປັນຕົ້ນມາຮອດປະຈຸບັນໃນລະຫວ່າງປີ 1966 ກຳມະການຜູ້ຫນຶ່ງຄື (ທ່ານທຳ ໄຊຍະສິດເສນາ) ໄດ້ມີຄວາມກ້າວຫນ້າຫ້າວຫັນ ອອກຫົວຄິດປະດິດສ້າງຮູບແຜນຜັງກໍ່ສ້າງປັບປຸງສິມຄືນໃຫມ່ທັງຫມົດ ເພື່ອໃຫ້ເປັນສິມທັນສະໄຫມກໍ່ສ້າງດ້ວຍຊີມັງເສີມເຫຼັກແຂງແຮງທົນທານຖາວອນໃຫ້ແລ້ວເສັດຄົບຖ້ວນເທືອດຮູບປັ້ນແປງອີກຄື: ຕໍ່ເສົາຂຶ້ນສູງກວ່າເກົ່າຝາສືບຕໍ່ສູງຂຶ້ນຕາມກັນ, ເພດານເທຊີມັງເສີມເຫຼັກ, ຫຼັງຄາຂຶ້ນຊົງເພດໃຫມ່ແບບວິຈິດພິດສະດານ, ແທ່ນພະເຈົ້າໃຫຍ່ພ້ອມປະຕູປ່ອງຢ້ຽມປ່ຽນແປງອອກແບບໃຫມ່ຫມົດ...

ຮອດບ່ອນນີ້ຄວນບັນທຶກການປະເມີນລາຄາກໍ່ສ້າງ ບູລະນະສະ ຖາປັດຕະຍະກຳປະຫວັດສາດອັນວິຈິດສະຫງ່າງາມນີ້ເປັນຫຼັກຖານ ໄວ້ດັ່ງນີ້:

ໃນປີ 1965 ຄະນະກຳມະການກໍ່ສ້າງບູລະນະສິມວັດອິນແປງ ອັນມີວິສາວະກອນຂອງກະຊວງໂຍທາລວມຢູ່ນຳ ໄດ້ປະເມີນລາຄາ ບູລະນະກໍ່ສ້າງສິມວັດອິນແປງຕາມຮູບແຜນຜັງໃໝ່ລ່ວງໜ້າ ເປັນ ເງິນປະມານ 50.000.000 ກີບ (ຫ້າສິບລ້ານກີບ).

ສະເພາະຄ່າຈ້າງແຕ້ມຮູບແຜນຜັງໃໝ່ນັ້ນ ຖ້າຄິດລາຄາຕາມ ອັດຕຣາມາດຕຣາຖານສາກົນ 12% ຂອງລາຄາປະເມີນ 50.000.000 ກີບ, ກໍ່ຄືເປັນເງິນຄ່າຈ້າງ 6.000.000ກີບ (ຫົກລ້ານກີບ). ຖ້າຈ້າງວິສາວະກອນອອກແບບແຕ້ມ ກໍ່ຈະແມ່ນ 6.000.000 ກີບ. ແຕ່ການອອກແບບຕາມຫົວຄິດກ້າວໜ້າ ລຳ ຍູກນີ້ແມ່ນທ່ານທຳ ໄຊຍະສິດເສນາ ເປັນຜູ້ຄວບຄຸມຮັບຜິດຊອບຕະ ຫຼອດຮອດການຕິດຕາມຄວບຄຸມກວດກາການກໍ່ສ້າງໃຫ້ໄດ້ຕາມແບບ, ລວມທັງການອອກຫົວຄິດ ວິຈິດຕະການປະດັບປະດາ ລວດລາຍສິນ ລະປະອັນວິຈິດພິດສະດານນັ້ນ ກໍ່ແມ່ນທ່ານ ທຳ ໄຊຍະສິດເສນາ. ເລີຍບໍ່ໄດ້ຈ້າງ. ແຕ່ກໍ່ຖືວ່າຈຳນວນເງິນມູນຄ່າ 6.000.000ກີບ ນີ້ ແມ່ນທາດແທ້ຂອງຜົນງານໝູ່ກ່ຽວໄດ້ອອກເຫື່ອແຮງມີຫົວຄິດ

ປະດິດສ້າງໃຊ້ສະຕິປັນຍາຄວາມຮູ້ສ້າງສາເປັນຜົນສຳເລັດຖືໄດ້ວ່າ
ເປັນມູນຄ່າທາງປັນຍາອັນລ້ຳເລີດ ເປັນປັດໃຈທຳມະທານ ທີ່ທ່ານ
ທຳ ໄຊຍະສິດເສນາ ໄດ້ອຸທິດທານລວມເຂົ້າໃນກອງກູສົນ ບໍລິບູນ
ແລ້ວ.

ພາຍໃນວັດມີພຣະອາຈານ ວັນດີ ເປັນອົງກອນສຳຄັນໃນການ
ຄວບຄຸມກຳກັບການກໍ່ສ້າງໃຫ້ເປັນໄປຕາມຮູບແຜນຜັງ. ພາຍນອກ
ມີພໍ່ແມ່ເຖົ້າແກ່ອາວຸໂສທັງໃນຄຸ້ມວັດອິນແປງ ແລະ ຄຸ້ມອື່ນໆ ຕະ
ຫຼອດຮອດປະຊາຊົນລາວ ແລະ ຊາວຕ່າງປະເທດໃນນະຄອນຫຼວງ,
ຕ່າງໄດ້ພ້ອມພຽງກັນທັງຝ່າຍຊາຍ ແລະ ຝ່າຍຍິງ ໜຸ່ມນ້ອຍເຍົາ
ວະຊົນ ລວມທັງພຣະສົງອົງຄະເຈົ້າໃນວັດຕ່າງໆ ໄດ້ອອກເຫື່ອເຫ
ແຮງເສຍສະລະເວລາອັນມີຄ່າອຸທິດເງິນທອງເຂົ້າຂອງອຸປະໂພກບໍ
ຣິໂພກເຂົ້າໃນການກໍ່ສ້າງໃຫ້ດຳເນີນສືບມາເລື້ອຍ.

ດ້ານຕ່າງປະເທດໂດຍສະເພາະກໍ່ແມ່ນປະເທດໄທ, ພົນເອກ
ທຳ ໄຊຍະສິດເສນາ ໃນນາມເປັນປະທານເຍົາວະພຸດສະມາຄົມ
ແລະ ໃນນາມປະທານກຳມະການກໍ່ສ້າງສິມວັດອິນແປງ ໄດ້ໄປພົວ
ພັນຕິດຕໍ່ກັບອົງການພຸດທະສາດສະໜາຂອງປະເທດໄທ ໄດ້ນຳ
ເອົາກອງກະຖິນຈາກບາງກອກ ແລະ ຈາກນະຄອນຊຽງໃໝ່ ມາ
ທອດຖວາຍທີ່ວັດອິນແປງເປັນເວລາສາມປີຕິດກັນ ນຳລາຍໄດ້ມະຫາ

ສານມາສູ່ວັດ (ປະມານສີ່ລ້ານປາຍກີບ)ອັນໄດ້ຊ່ວຍໃຫ້ການກໍ່ສ້າງສ່ວນສຳຄັນຂອງສິມຄືຫຼັງຄາ ແລະ ພີດານສີຫນ້າສຳເລັດລຸລ່ວງໄປ.

ຖ້າຈະລວມປັດໄຈກະບວນໃຫຍ່ສອງຄັ້ງທີ່ທ່ານ ທຳ ໄຊຍະສິດເສນາ ມີຈິດໃຈເປັນເຈົ້າການຂົນຂວາຍທານມາສົມທົບທຶນກໍ່ສ້າງ ບູລະນະສິມວັດອິນແປງ ກໍຈະເປັນເງິນ :

6.000.000 + 4.000.000 ກີບ = 10.000.000 ກີບ

(ສິບລ້ານກີບ).

ໃນປີ 1985 ສີຫນ້າດ້ານຫຼັງ ແລະປະຕູຫຼັງສຳເລັດທາສີພອກຄຳ.

ໃນປີ 1986 ປະຕູຊ້າຍຂວາດ້ານຫນ້າສຳເລັດທາສີພອກຄຳ

ໃນປີ 1988 ພອກຄຳພະເຈົ້າໃຫຍ່ ແລະ ພະເຈົ້າອິນທາທິຣາຊ ທາສີແຫນ່ພ້ອມ- ໂດຍແມ່ນຍາພໍ່ບົວຈັນ ຍາແມ່ ອະນົງ ອິນທະວົງ ພ້ອມຄອບຄົວ, ຍາພໍ່ທຳ ຍາແມ່ຈອກມະນີ ໄຊຍະສິດເສນາ ພ້ອມທັງເຖົ້າແກ່ພໍ່ແມ່ຄະຫະບໍດີ ແລະ ປະຊາຊົນຜູ້ສັດທາເປັນຜູ້ກຳກັບ ແລະ ອຸທິດເງິນທອງເຂົ້າຂອງຕ່າງໆ ຈົນສຳເລັດເສັດສົມເປັນມະຫາກຸສົນອັນຍິ່ງໃຫຍ່ໄພສານ.

ຫນັງສືໃບອະນຸໂມທະນາບັດ ທີ່ວັດໄດ້ອອກໃຫ້ແກ່ຜູ້ອຸທິດ ທານ

ວັດຖູປັດໄຈໃຫ້ແກ່ພຣະເຈົ້າໃຫຍ່ວັດອິນແປງ ຍ່ອມເປັນຫຼັກຖານພິສູດເຖິງຄວາມສັດທາເຊື່ອຖືໃນບໍວອນພູດທະສາດສະໜາ ແລະ ຄວາມສາມັກຄີແນບແໜ້ນເຖິງຖອງຂອງປະຊາຊົນຊາວພູດ.

ສັງເກດໄດ້ວ່າ ມີການກາວຂານກັນໃນສັງຄົມ ທັງໃນວົງພຣະສັງຄານູເຖຣະ ແລະ ໃນຫມູ່ປະຊາຊົນວ່າ ສິມວັດອິນແປງ ສວຍງາມເປັນນ້ຳເບີໜຶ່ງຂອງລາວ. ແຕ່ການບູຣະນະສ້າງສາກໍຍັງດຳເນີນຢູ່ບໍ່ທັນແລ້ວ, ຄັນແລ້ວເມື່ອໃດຄວາມງາມຍ່ອມຈະທະວີຍິ່ງຂຶ້ນອີກ.

ປະຈຸບັນເຈດີພະທາດຫຼວງໜຶ່ງ-ວັດອິນແປງມະຫາວິຫາຣໜຶ່ງ ວັດອົງຕື້ມະຫາວິຫາຣໜຶ່ງ ວັດພະແກ້ວໜຶ່ງ ແລະ ວັດສີສະເກດໜຶ່ງ ຫ້າວັດນີ້ໄດ້ຈົດເຂົ້າບັນຊີເປັນວັດຫຼວງຂອງຊາດ ແຕ່ນານມາແລ້ວ. ຖືເປັນປູຍະສະນີຍະສະຖານອັນສັກສິດ ແລະ ມີຄ່າທາງປະຫວັດສາດ ແລະ ເປັນສະຖາປັດຕະຍະກຳບູຮານອັນສວຍສົດ ງົດງາມໃນພູມີພາກນີ້.

ຜູ້ຣິດຈະນາ

ທ. ທຳ ໄຊຍະສິດເສນາ.

ບົດ ໄຫວ້ພະຣັດຕະນະ ໄຕ

ອິມິນາ ສັກກະເຣນະ ຕັງ ພຸດທັງ ອະພິປູຊະຍາມິ, ອະຣະຫັງ ສັມມາສັມພຸດ ໂທ ພະຄະວາ, ພຸດທັງ ພະຄະວັນຕັງ ອະພິວາເທມິ.

-ອິມິນາ ສັກກາເຣນະ ຕັງ ທັມມັງ ອະພິປູຊະຍາມິ,
ສວາກຂາ ໂຕ ພະຄະວະຕາທັມ ໂມ ທັມມັງ ນະມັດສາມິ.
-ອິມິນາ ສັກກາເຣນະ ຕັງ ສັງຄັງ ອະພິປູຊະຍາມິ,
ສຸປະຕິປັນ ໂນ ພະຄະວະ ໂຕສາວະກະສັງ ໂຄ ສັງຄັງນະມາມິ.

+ນະ ໂມ ຕັດສະ ພະຄະວະ ໂຕ ອະຣະຫະ ໂຕ ສັມມາສັມພຸດທັດສະ.

(ວ່ານະ ໂມ 3 ເທື່ອຈົບ)

+ພຸດທັງ ສະຣະນັງ ຄັດສາມິ,
+ທັມມັງ ສະຣະນັງ ຄັດສາມິ,
+ສັງຄັງ ສະຣະນັງ ຄັດສາມິ,
ທຸຕິຍັມປິ ພຸດທັງ ສະຣະນັງ ຄັດສາມິ,
ທຸຕິຍັມປິ ທັມມັງ ສະຣະນັງ ຄັດສາມິ,
ທຸຕິຍັມປິ ສັງຄັງ ສະຣະນັງ ຄັດສາມິ,
ຕະຕິຍັມປິ ພຸດທັງ ສະຣະນັງ ຄັດສາມິ,
ຕະຕິຍັມປິ ທັມມັງ ສະຣະນັງ ຄັດສາມິ,
ຕະຕິຍັມປິ ສັງຄັງ ສະຣະນັງ ຄັດສາມິ,

-ອິຕິປິໂສ ພະຄະວາ ອະຣະຫັງ ສັມມາສັມພຸດໂທ ວິດ
ຊາຈະຣະນະສັມປັນໂນ ສຸຄະໂຕ, ໂລກະວິທູ ອະນຸດ
ຕະໂຣ ປຸຣິສະທັມມະສາຣະຖີ ສັດຖາ ເທວະມະນຸດສາ
ນັງພຸດໂທພະຄະວາຕິ.

-ກາເຍນະ ວາຈາຍະ ວະ ເຈຕະສາ ວາ,
ພຸດເທ ກຸກັມມັງ ປະກະຕັງ ມະຍາ ຍັງ,
ພຸດໂທ ປະຕິຄັນໜະຕຸ ອັດຈະຍັນຕັງ,
ກາລັນຕະເຣ ສັງວະຣິຕຸງວະ ພຸດເທ.

-ສວາກຂາໂຕ ພະຄະວະຕາ ທັມໂມ, ສັນທິດຖິໂກ
ອະກາລິໂກ ເອຫິປັດສິໂກ ໂອປະນະຍິໂກ ປັດຈັດຕັງ
ເວທິຕັບໂພ ວິນຍູຫີຕິ.

-ກາເຍນະ ວາຈາຍະ ວະ ເຈຕະສາ ວາ,
ທັມເມ ກຸກັມມັງ ປະກະຕັງ ມະຍາ ຍັງ,
ທັມໂມ ປະຕິຄັນໜະຕຸ ອັດຈະຍັນຕັງ,
ກາລັນຕະເຣ ສັງວະຣິຕຸງວະ ທັມເມ.

-ສຸປະຕິປັນໂນ ພະຄະວະໂຕ ສາວະກະສັງໂຄ,
ອຸຊຸປະຕິປັນໂນ ພະຄະວະໂຕ ສາວະກະສັງໂຄ,
ຍາຍະປະຕິປັນໂນ ພະຄະວະໂຕ ສາວະກະສັງໂຄ,
ສາມີຈິປະຕິປັນໂນ ພະຄະວະໂຕ ສາວະກະສັງໂຄ,
ຍະທິທັງ ຈັດຕາຣິ ປຸຣິສະຍຸຄານິ ອັດຖະ ປຸຣິສະປຸກຄະລາ,
ເອສະ ພະຄະວະໂຕສາວະກະສັງໂຄ ອາຫຸເນຍໂນ, ປາຫຸ
ເນຍໂນ ທັກຂິເນຍໂນ ອັນສະຣິກະຣະນີໂຍ, ອະນຸດຕາລັງ
ປຸນຍັກເຂດຕັງ ໂລກັດສາຕິ.

-ກາເຍນະ ວາຈານະ ວະ ເຈຕະສາ ວາ,
ສັງເຄ ກຸກັມມັງ ປະກະຕັງ ມະຍາ ຍັງ,
ສັງໂຄ ປະຕິກຄັນຫະຕຸ ອັດຈະຍັນຕັງ,
ກາລັນຕະເຣ ສັງວະຣິຕຸງວະ ສັງເຄ.

+ອຸກາສະ ວັນທາມິ ພັນເຕ, ເຈຕິຍັງ ສັບພັງ ສັບພັດ ກະ ກາເນສຸປະຕິດກິຕັງ, ສາຣິຣິກະທາຕຸມະຫາ ໂພທິງ ພຸດທະຣູປັງ ສະກະລັງ ສະທາ ວະຈະສາ ມະນະສາ ເຈວະວັນທາເມເຕ, ຕະກາຄະເຕ ສະຍະເນ ອາສະ ເນກາເນ ຄະມະເນ ຈາປິ ສັບພະທາ.

+ອຸກາສະ ວັນທາມິ ພັນເຕ, ສັບພັງ ອະປະຣາທັງ ຂະມະກະ ເມພັນເຕ, ມະຍາກະຕັງ ປຸນຍັງ ສາມິນາ ອະນຸໂມທິຕັບພັງ, ສາມິນາ ກະຕັງ ປຸນຍັງ ມັຍຫັງ, ທາຕັບພັງ ສາທຸ ສາທຸ ອະນຸໂມທາມິ.

-ສັກເຄ ກາເມ ຈະ ຣູເປ ຄິຣິສິຂະຣະຕະເຕ ຈັນຕະ ລິກເຂ ວິມາເນ, ທິເປ ຣັດເຖ ຈະ ຄາເມ ຕະຣຸວະ ນະຄະຫະເນ ເຄຫະວັດກຸມຫິ ເຂດເຕ, ພຸມມາ ຈາຍັນ ຕຸເທວາ ຊະລະກະລະວິສະເມ ຍັກຂະຄັນທັບພະນາຄາ, ຕິດກັນຕາ ສັນຕິເກ ຍັງ ມຸນິວະຣະສະຈາບັງ ສາທະໂວ ເມ ສຸນັນຕຸ,

ທັມມັດສະວະນະກາໂລ ອະຍັມພະທັນຕາ,
ທັມມັດສະວະນະກາໂລ ອະຍັມພະທັນຕາ,

ທັມມັດສະວະນະກາໄລ ອະຍັມພະທັນຕາ,

–ສາທຸ ອຸກາສະ * !

ມະຍັງ ພັນເຕ ວິສຸງ ວິສຸງ ຣັກຂະນັດຖາຍະ
ຕິສະຣະເນນະ ສະຫະ ປັນຈະ ສີລານິ ຍາຈາມະ
ທຸຕິຍັມປິ ມະຍັງ ພັນເຕ ວິສຸງ ວິສຸງ ຣັກຂະນັດຖາຍະ
ຕິສະຣະເນນະ ສະຫະ ປັນຈະ ສີລານິ ຍາຈາມະ
ຕະຕິຍັມປິ ມະຍັງພັນເຕ ວິສຸງ ວິສຸງ ຣັກຂະນັດຖາຍະ
ຕິສະຣະເນນະ ສະຫະ ປັນຈະ ສີລານິ ຍາຈາມະ.

ຄຳອາຣາດທະນາປະຣິຕມຸງຄຸນມີເນື້ອໃນດັ່ງລຸ່ມນີ້:

ສາທຸ ອຸກາສະ !

ວິປັດຕິປະຕິພາຫາຍະ ສັບພະສັມປັດຕິສິດທິຍາ
ສັບພະທຸກຂະວິນາສາຍະ ປະຣິດຕັງ ພຣູກະມັງຄະລັງ.
ວິປັດຕິປະຕິພາຫາຍະ ສັບພະສັມປັດຕິສິດທິຍາ
ສັບພະພະຍະວິນາສາຍະ ປະຣິດຕັງ ພຣູກະ ມັງຄະລັງ.
ວິປັດຕິປະຕິພາຫາຍາ ສັບພະສັມປັດຕິສິດທິຍາ
ສັບພະໂຣຄະວິນາສາຍະ ປະຣິດຕັງ ພຣູກະມັງຄະລັງ.

ຄຳອາຣາດທະນາເທດທົ່ວໄປມີເນື້ອໃນດັ່ງນີ້:

ພຣົມມາຈະໂຣກາ ທິປາຕິສະຫັມປະຕິ ກັດອັນຊະລີ ອັນທິວະລັງ ອະຍາຈະກະສັນຕິທະ ສັດຕາປຣະຊັກຂະຊາ ຕິກາ ເທເສຕຸ ທັມມັງ ອະນຸກັມປີມັງ ປະຊັງ.

ຄຳກວາຍທານທີ່ວ ໄປມີເນື້ອ ໃນດັ່ງລຸ່ມນີ້ :

ສຸທິນນັງ ວະຕະເມ ທານັງ ອາສາວະຂະຍາວະທັງ ນິບພານະ ສັງຄະຕັງ ໂຫຕຸ ທຸຕິຍັມປິ ສຸທິນນັງ ວະຕະເມທາ ນັງ ອາສາວະຂະຍາວະທັງ ນິບພານະ ສັງຄະຕັງ ໂຫຕຸ, ຕະຕິຍັມປິ ສຸທິນນັງ ວະຕະເມທານັງ ອາສາວະຂະຍາວະທັງ ນິບພານະ ສັງຄະຕັງ ໂຫຕຸ.

ພວກຂ້າພະເຈົ້າທັງຫລາຍມີຄວາມເຫລື້ອມໃສຍິນດີໃນ ທານການໃຫ້ຂອງເຫລົ່ານີ້ຈົ່ງເກີດຄວາມສິ້ນໄປແຫ່ງອາສາວະກິ ເລດເຄື່ອງດອງສັນດານໃນອານາຄົດຕະການເບື້ອງໜ້າ; ນັ້ນເທີ້ນ.

ຄຳອຸທິດສ່ວນກຸສົນມີເນື້ອໃນດັ່ງນີ້:

ສ່ວນບຸນກຸສົນທັງຫລາຍທີ່ພວກຂ້າພະເຈົ້າໄດ້ກະທຳລົງ ແລ້ວ ດ້ວຍກາຍວາຈາ ແລະໃຈ ເປັນຕົ້ນວ່າໄດ້ທານ ໄດ້ ຮັກສາສິນ ໄດ້ສະດັບຮັບຟັງ ວັດສາພະທັມມະ ເທສນາໄດ້ຈະ ເຣີນ ເມດຕາ ພາວະນາແລະໄດ້ທຳ: ໄວຍາວັຈະກອນມາ ແລ້ວນັ້ນ ພວກຂ້ານ້ອຍທັງຫລາຍ ຈະຂໍອຸທິດ ໃຫ້ແກ່ສັພສັດທັງ ຫລາຍ ມີບິດາ ແລະ ມານດາ ສາມີພັນລະຍາ ບຸດຕາ ບຸດຕີ ຍາດມິດສະຫາຍ ຄຣູອຸປປັດຊາອາຈານ ຕະຫລອດສັບພະສັດທັງ ຫລາຍ ທຸກກ້ວນໜ້າເບື້ອງເທິງ ແຕ່ພົຣມມະໂລກລົງມາເບື້ອງ ຕ່ຳ ແຕ່ອະເວຈີຂຶ້ນມາ ລວງກ້ວາງ ຕະຫລອດອະນັນຕະຈັກກະ

ວານ ເປັນ ຂອບຟູງປະກອບ ດ້ວຍສຳມາທິດກິ ຂໍເຊີນຊວນກັນ ມາຮັບເອົາສ່ວນບຸນກຸສົນທີ່ພວກຂ້ານ້ອຍທັງຫລາຍ ໄດ້ທຳບຸນອຸທິດ ໃຫ້ໃນເວລາວັນນີ້ໃຫ້ເຫມືອນດັ່ງຕົນ ໄດ້ກະທຳເອງເທີ້ນກ້າຫາກ ວ່າບໍ່ຮູ້ ແລະ ມາຮັບບໍ່ໄດ້ຂໍເຊີນເທພເຈົ້າ ເຫລົ່າສະຫວັນທັງ ຫລາຍ ຂໍຈົ່ງນຳໄປບອກຂ່າວແກ່ສັພສັດທັງຫລາຍເຫລົ່ານັ້ນ ໃຫ້ ພາກັນມາຮັບເອົາສ່ວນບຸນກຸສົນ ໃນເວລາວັນນີ້ ກ້າຜູ້ໃດມີຄວາມ ທຸກຂໍໃຫ້ພົ້ນຈາກທຸກ ກ້າຜູ້ໃດມີຄວາມ ສຸກແລ້ວຂໍໃຫ້ສຸກຍິ່ງໆຂື້ນ ໄປຈົນເທົ້າ ເຂົ້າສູ່ພຣະນິພານ,ອີກປະການຫນຶ່ງ ດ້ວຍອຳນາດ ບຸນກຸສົນຜົນບຸນນີ້ ຈົ່ງໃຫ້ເປັນອຸປະນິສັຍ ປັດຈັຍໃຫ້ພວກຂ້ານ້ອຍ ທັງຫລາຍນີ້ ໄດ້ບັນລຸພະນິພພານກ້າແມ່ນການຈຳເປັນ ຍັງບໍ່ ໄດ້ ເຖິງແລ້ວກ້າຫາກວຽນວາຍຕາຍເກີດ ຢູ່ໃນຊາດພົບໃດໆກໍ ດີ ຂໍໃຫ້ ພວກຂ້ານ້ອຍທັງຫລາຍນີ້ ໄດ້ພົ້ນຈາກສັພະທຸກທັງປວງ ຂື້ນຊື່ວ່າຄວາມເຂັ້ນໃຈໄຮ້ຊັບອັບປັນຍາເຫມືອນດັ່ງຊາດນີ້ ຂໍຢ່າ ໄດ້ມີເລີຍ ຂໍໃຫ້ພວກຫມູ່ຂ້ານ້ອຍທັງຫລາຍນີ້ ໄດ້ປຣາສະຈາກ ໃຈທີ່ເປັນອາກຸສົນນັ້ນດ້ວຍເທີ້ນ.

<u>ຄາກາ ໄຫວ້ພະເຈົ້າໃຫຍ່ອິນແປງຊຶ່ງມີບົດຄວາມດັ່ງລຸ່ມນີ້</u>:

ມັກຄັງ ຄັດສາມິ,
ພະລັງ ຄັດສາມິ.
(ວ່າ 3 ເທື່ອຈົບ)

ວິທີການໃຊ້ຄາຖາ:

ເປັນຄາຖາປ້ອງກັນຕົວໃນຍາມເດີນທາງໄປທາງໄກ, ຈະເປັນການເດີນ ທາງດ້ວຍເຮືອ, ການເດີນທາງດ້ວຍລົດ, ເດີນທາງເຂົ້າໄປໃນປ່າຫລະກັນດານ ຫລື ຈະເດີນທາງໄປໄກ ຫລື ໃກ້ ໃຫ້ພາວະນາເລື້ອຍໆ ກ່ອນການອອກເດີນທາງຈະດີ ຫນັກແລ.

ນອກຈາກນີ້ແລ້ວກ້າຫາກຫມັ່ນພາວະນາທຸກເຊົ້າຄ່ຳກໍຈະມີ ຄວາມຈະເລີນຮຸ່ງເຮືອງໃນຊີວິດ ບໍ່ວ່າຈະເປັນການຄ້າຂາຍ, ການປະຕິບັດຫນ້າທີ່ວຽກງານຕ່າງໆກໍດີ ຫນັກແລ.

ຄະຕິພົດ:

ຜູ້ຫລຸດພົ້ນຈາກກິເລສ ເພາະເຫດພະວັນນາ
ຜູ້ມີວິຊາເພາະການສຶກສາ
ຜູ້ມີບຸນວາສນາເພາະສ້າງບຸນກຸສົນ
ຜູ້ເກີດມາເປັນຄົນເພາະຮັກສາສິນ 5.

ເຕືອນຕົນ

ໃຜຢາກສຸກ ໃຫ້ມີຄວາມສາມັກຄີ
ໃຜຢາກມີ ໃຫ້ຊ່ວຍເຫລືອກັນ
ໃຜຢາກຂຶ້ນສວັນ ໃຫ້ສ້າງບຸນກຸສົນ
ໃຜຢາກເກີດເປັນຄົນ ໃຫ້ຮັກສາສິນ 5.

ໃບແຊກ

ຕໍ່ທ້າຍ ພາກ " ວັດອິນແປງກ່ອນພັນເຂົ້າໃນປະຫວັດສາດຊາດລາວ" (ໜ້າ 11-12).

ບັນທຶກການສຳພັນທະໄມຕຣີ ອັນແນບແໜ້ນ ລະຫວ່າງກຣຸງວຽງຈັນ ແລະກຣຸງສີອະຍຸດທະຍາ ໃນສະໄໝພະເຈົ້າໄຊເສດຖາມະຫາຣາຊທີ່ໄດ້ຊົງສ້າງ <u>ພະທາດເຈດີ "ສີສອງຮັກ"</u> ຂຶ້ນໄວ້ທີ່ອຳເພີດ່ານຊ້າຍ, ຈັງຫວັດເລີຍ ປະເທດໄທ -(ເປັນສັກຂີພະຍານແຫ່ງຄວາມຮັກລະຫວ່າງສອງພີ່ນ້ອງ ລາວ-ໄທ.) <u>ແມ່ນຜົນງານອັນລ້ຳຄ່າ ແລະເປັນປະຫວັດການຂອງກະສັດລາວ.</u>

ພະທາດເຈດີ "ສີສອງຮັກ" ອະນຸສອນອັນບໍ່ມີວັນສູນສະຫລາຍແຫ່ງນີ້ເກີດຂຶ້ນຍ້ອນມິດໄມຕີໃນລະດັບຂະຫຍາຍເຂົ້າຂັ້ນເປັນຄອບຄົວດຽວກັນ (ເປັນດອງກັນ) ລະຫວ່າງ ສອງກະສັດລາວ-ໄທ. ບັນທຶກປະຫວັດສາດຂຽນວ່າ: ພະເຈົ້າ ກຸງສີອະຍຸດທະຍາໄດ້ຊົງແຕ່ງຕັ້ງເສນາ ອຳມາດຣາຊບໍລິພານເປັນຂະບວນແຫ່ເອົາພະນາງເຈົ້າ "ພະເທບກະສັດຕຣີ" ພະຣາຊທິດາຂອງພະຣາຊິນີ ພະນາງເຈົ້າສີສຸຣິໂຍໃທ້ຂຶ້ນມາຍັງກຣຸງວຽງຈັນເພື່ອຮ່ວມບາລະມີເປັນໂພທິສົມພານ ກັບພະເຈົ້າໄຊເສດຖາມະຫາຣາຊ (ຕາມຄຳຂໍຂອງກະສັດລາວ ຊຶ່ງ ເວລານັ້ນຍັງເປັນໂສດຢູ່). ພໍຂະບວນແຫ່ມາເຖິງກາງທາງ ກະສັດແຫ່ງ ກຣຸງຫົງສາວະດີສືບຊາບ ໂດຍການຮ່ວມໃຈຂອງເຈົ້າເມືອງພິສະນຸໂລກ, ໄດ້ແຕ່ງກອງທັບມາຍາດເອົາ ພະເທພກະສັດຕຣີໄປໄດ້, ເປັນເຫດພາໃຫ້ກຣຸງວຽງຈັນ ແລະກຣຸງສີອະຍຸທະຍາ ຍິ່ງມີໃຈ

ຮັດແໜ້ນຄວາມສາມັກຄີເປັນມິດໄມຕີທະວີຄູນຕໍ່ໜ້າສັດຕູພະມ້າຕົວດຽວກັນ, ແລະຈຶ່ງໄດ້ສ້າງພະທາດສີສອງຮັກຂຶ້ນໄວ້ເປັນສັກຂີແຫ່ງຄວາມຮັກນັ້ນເພື່ອບໍ່ໃຫ້ມີວັນຫລົງລືມຣາຊສຳພັນທະໄມຕຣີອັນເປັນປະຫວັດການຍິ່ງໃຫຍ່.

ໃນກາລະເວລາຕໍ່ມາພະເຈົ້າໄຊເສດຖາທິຣາຊໄດ້ໄປ ຂໍພະຣາຊທິດາຂອງກະສັດນະຄອນຊຽງໃໝ່ຂຶ້ນເປັນພະຣາຊີນີ.

ຄວາມສຳເລັດດ້ານຄວາມສຳພັນກັບປະເທດຂ້າງຄຽງອັນສຳຄັນເປັນປະຫວັດການອີກຄັ້ງນຶ່ງ ທີ່ມີບັນທຶກໄວ້ເປັນຫລັກຖານກໍຄືຄວາມສຳພັນທະໄມຕີກັບກຣຸງທິງສາວະດີ ປະເທດພະມ້າຄັ້ງຫລັງສຸດ. ບັນທຶກຂຽນວ່າ: ໃນຂະນະທີ່ພະເຈົ້າໄຊເສດຖາທິຣາຊກຳລັງສ້າງພຸທະພູມຢູ່ຕໍ່ໜ້າພະເຈົ້າໃຫຍ່ວັດອິນແປງ ຄືກຳລັງກຽມການຈະທຳພິທີເທທອງສຳລິດ ຫລໍ່ອົງພະເຈົ້າໃຫຍ່ ວັດ "ອົງຕື້" ຢູ່ນັ້ນ ກອງທັບພະມ້າໄດ້ຫລົບລີ້ເຂົ້າມາປິດລ້ອມ ກຣຸງວຽງຈັນໄວ້ໄດ້. ແລ້ວຍື່ນຣາຊສານຄຳຂາດໄປໃຫ້ພະເຈົ້າ ໄຊເສດຖາທິຣາຊ ໃຈຄວາມວ່າ: "1. ໃຫ້ອອກມາສູ້ລົບກັນ 2. ໃຫ້ຍອມເປັນຫົວເມືອງຂຶ້ນຂອງພະມ້າ". ໃນຂະນະນັ້ນພະເຈົ້າໄຊເສດຖາທິຣາຊ ບໍ່ມີຈິດໃຈຄິດຈະທຳສົງຄາມກັບຜູ້ໃດຈິດໃຈມຸ້ງໝັ້ນຈະທຳບຸນຢ່າງດຽວ ຈຶ່ງບໍ່ຕັດສິນໃຈຕອບຄຳຂາດຂອງພະມ້າ. ໄດ້ນຳເອົາສານຄຳຂາດຂອງພະມ້າກັບເຂົ້າສູ່ "ຫໍຄຳ" ພະຣາຊວັງ ສົ່ງໃຫ້ພະຣາຊີນີຊ່ວຍພິຈາລະນາແກ້ໄຂ.

ເມື່ອໄດ້ຄຳແນະນຳອັນເປັນຈອມປຣາດຂອງພະຣາຊີນີແລ້ວ ພະອົງກໍກັບໄປຍັງທີ່ໄຊ ທີ່ວັດອິນແປງ ບ່ອນຈະເທທອງຫລໍ່ພະເຈົ້າໃຫຍ່ຕາມປະສົງ. ທຸກສິ່ງທຸກຢ່າງເປັນໄປຕາມແຜນຂອງພະຣາຊີນີວາງໃຫ້ທຸກປະການ (ລາຍລະອຽດມີກ່າວຢູ່ໃນ

ໜັງສືປະຫວັດວັດອິນແປງ) ສາມາດບັນດານໃຫ້ສັດຕູ ປອ່ນໃຈ ຈາກສັດຕູມາເປັນມິດໄດ້ສຳເລັດ. ກະສັດແມ່ທັບພະມ້າສະໝັກໃຈເຂົ້າສະຫວາມີຜູກມິດໄມຕີກັບພະເຈົ້າໄຊເສດຖາທິຣາຊໂດຍດີດ້ວຍຄວາມພໍໃຈຊົມຊື່ນປິຕິ ແລະ ສັກກາລະບູຊາຢ່າງສຸດໃຈຕໍ່ຄວາມເປັນນັກປາຊຣາຊປະຕິພານ, ມີຈິດໃຈເມດຕາ ແຜ່ໄພສານຕາມທຳນອງຄອງພຸທະສາສະໜາທ່ຽງແທ້ຈິງເກີງຂັ້ນແມ່ທັບພະມ້າຜູ້ຍິ່ງໃຫຍ່ (ຈະແມ່ນບູເຣນອງ ຫລື ຜູ້ໃດ ? ຈະສຶກສາຄົ້ນຄ້ວາອີກຕໍ່ນີ້) ໃນນາມກະສັດພະມ້າ ໄດ້ຂໍພະຣາຊທານອະນຸຍາດດ້ວຍບໍລິສຸດໃຈ ຈາກພະເຈົ້າໄຊເສດຖາມະຫາຣາຊເພື່ອຂົນຫີນມາຂວັດແກະສະຫລັກສ້າງອະນຸສອນພະຮູບຂອງພະບໍຣົມຣາຊີນີນາດ ຂອງກຣຸງວຽງຈັນ ແລະຂອງກຣຸງຫົງສາວະດີຂຶ້ນໄວ້ຄູ່ຄຽງກັນ ໂດຍເຈຕະນາຈະຂໍໃຫ້ເປັນອະນຸສອນສັກຂີອັນເລີກເຊິ່ງເຕັມປອ່ມໄປດ້ວຍຄວາມຄາລະຫວະເຫລື້ອມໃສແຫ່ງມິດໄມຕຣີລະຫວ່າງສອງກະສັດຂອງກຣຸງວຽງຈັນ ແລະ ກຣຸງຫົງສາວະດີ. (ພະຮູບອະນຸສອນດັ່ງກ່າວເວລານີ້ຍັງຕັ້ງສະຖິດຢູ່ຕິດກັບຝາດ້ານຫລັງຂອງສິມວັດອິນແປງ).

ປະການນຶ່ງມີຂໍ້ຄິດເປັນປົດສະໜາກ່ຽວກັບພະຮູບຂອງພະຣາຊີນີແຫ່ງກຣຸງຫົງສາວະດີນັ້ນວ່າ ພະຣາຊີນີອົງນີ້ຈະແມ່ນຣາຊຕະກູນໃດແທ້ ? ຈະແມ່ນອົງພະເທພກະສັດຕຣີ ຣາຊທິດາຂອງພະນາງເຈົ້າສີສຸຣິໂຍໄທ ທີ່ກະສັດຫົງສາວະດີຍາດແຍ່ງເອົາໄປນັ້ນຫລືບໍ່ ? ປະການໃດ (ຈະໄດ້ຕິດຕາມຄົ້ນຄ້ວາຫາຄວາມຈິງຕໍ່ໄປ).

ກ້າຫາກແມ່ນອົງພະເທພກະສັດຕຣີຈິງ ການກະທຳຂອງກະສັດແຫ່ງຫົງສາວະດີ ຄືການຂວັດຮູບຂອງພະອົງໄວ້ແທນຕົວຈິງ ເພື່ອເປັນທີ່ລະລຶກຢືນຢູ່ຄູ່ຄຽງກັບພະຣາຊີນີຂອງພະເຈົ້າໄຊ

ເສດຖາທິຣາຊນັ້ນຍ່ອມຊວນພິສູດຄວາມໝາຍອັນເລີກເຊິ່ງວ່າ: ແມ່ນການສົມມາຄາລະຫວະຂໍອາໂຫສິຕໍ່ພະເຈົ້າໄຊເສດຖາທິຣາຊ ທີ່ກະສັດພະມ້າໄດ້ກະທຳການລົບລູ່ລ່ວງເກີນຕໍ່ກະສັດລ້ານຊ້າງທີ່ເຕັມປ່ອມໄປດ້ວຍຄຸນນະທຳແຫ່ງພຸທະພູມອັນບໍລິສຸດຂາວສະອາດ ກະສັດຫົງສາວະດີອາດສຳນຶກຕົນຕົວວ່າ ການກະທຳຂອງຕົນນັ້ນແມ່ນແບບໂຈນປຸ້ນສະດົມ ຊຶ່ງການກະທຳນັ້ນບໍ່ເໝາະສົມ ແລະບໍ່ບັງຄວນທີ່ຈະແມ່ນການກະທຳຂອງອົງກະສັດຜູ້ຊົງກອດສັກສີ. ຫລື ຫາກຈະແມ່ນຄວາມຄິດ ແລະ ການກະທຳຂອງເສນາອຳມາດຜູ້ນຶ່ງຜູ້ໃດ ເພື່ອໄດ້ສາວງາມໄປກະຫວາຍແກ່ກະສັດອົງເອກຂອງຕົນ ເພື່ອຕົນຈະໄດ້ຮັບຣາຊອິດສະຣິຍາພອນລາບຍົດ ແລະ ປະໂຫຍດຕອບແທນໃດ ໆ ກໍດີ ກໍຍັງຍ່ອມບໍ່ເປັນການບັງຄວນຢ່າງຍິ່ງ. ສະນັ້ນກະສັດແຫ່ງຫົງສາວະດີຈຶ່ງເກີດຈິດໃຈຈະຂໍລຶບລ້າງມົນທິນນັ້ນກຸ້ມເສັຍ ແລະຂໍອະໂຫສິ ສົມມາຄາລະຫວະແລ້ວຂໍຜູກສຳພັນທະໄມຕຣີກັບກຣຸງວຽງຈັນ ລ້ານຊ້າງໄວ້ຍາວນານ. ນັບແຕ່ນັ້ນມາບໍ່ປາກົດວ່າທັບພະມ້າໄດ້ລົງມາຕີລາວແລະສະຢາມອີກຈັກເທື່ອ.

ເຫດການທັງໝົດທີ່ບັນທຶກເທິງນີ້ ເປັນເຫດການທີ່ເກີດຂຶ້ນໃນຊ່ວງໄລຍະເວລາຂອງຣາຊການຂອງພະບາດສົມເດັດພະເຈົ້າໄຊເສດຖາມະຫາຣາຊຊ່ວງດຽວ ຈຶ່ງເປັນຂໍ້ມູນທີ່ຊວນໃຫ້ພິຈາລະນາໄດ້ວ່າ: ພະຣາຊິນີຂອງກະສັດແຫ່ງຫົງສາວະດີນັ້ນແທ້ຈິງອາດແມ່ນອົງພະເທພກະສັດຕຣີທີ່ກຶກຍາດແຍງໄປນັ້ນເອງ.

ທັງສອງເຫດການທີ່ຂຽນເທິງນີ້ ແມ່ນຜົນງານຄວາມສຳເລັດອັນເລີດລ້ຳງົດງາມທາງດ້ານການເມືອງຕ່າງປະເທດ ຄືການຜູກສຳພັນຣາດຊະໄມຕຣີກັບປະເທດຂ້າງຄຽງຊຶ່ງເປັນປະຫວັດການສຳຄັນຫາອັນປຽບປານໄດ້ຍາກ.

ລາຍຊື່ຜູ້ຮ່ວມບໍລິຈາກ
ຄ່າພິມປຶ້ມປະຫວັດວັດອິນແປງ

1. ພະອາຈານ ກ້າວພຸດທະວົງ 20.000 ກີບ
2. ພະອາຈານ ສົມພອນ ພົມມະຫາໄຊ 5.000 ກີບ
3. ພະອາຈານ ເຫວດ ມາເສໃນ 20.000 ກີບ
4. ພະອາຈານ ຄໍາມາ ປັນຍາວິຈິດ 10.000 ກີບ
5. ພະອາຈານ ຈັນດີ ອິນທິຣາດ 50.000 ກີບ
6. ຍາພໍ່ບົວຈັນ ແລະ
   ຍາແມ່ອານົງ ອິນທະວົງ 100.000 ກີບ
7. ທ່ານ ປຣະຊາ ບໍລິການ ນ.ສຸພາບ 100.000 ກີບ
8. ຍາພໍ່ ພັນເຫຼົ້າ ສີວັດທະນາ 50.000 ກີບ
9. ຍາແມ່ ຄໍາຜິງ ສຸວັນນະວົງ 50.000 ກີບ
10. ຍາແມ່ ທາ ປະກົມມະວົງ 50.000 ກີບ
11. ຍາແມ່ ກິ່ມອອງ ພິລາພັນເດດ 10.000 ກີບ
12. ຍາແມ່ ຄໍາພຸກ ຈັນທະປັນຍາ 10.000 ກີບ
13. ຍາແມ່ ວຽງ ພ້ອມຄອບຄົວ 10.000 ກີບ
14. ຍາແມ່ ວາລິນ ຄໍາວົງສາ 10.000 ກີບ
15. ນາງ ພອນສະຫວັນ ວົງພະນະຄອນ 15.000 ກີບ
16. ນາງ ພິນນະພາ ໄຊຍະສິດເສນາ 10.000 ກີບ
17. ຄອບຄົວທ່ານ ບຸນຍັງ ອິນທະຊຸມ 10.000 ກີບ
18. ຄອບຄົວທ່ານ ບຸນຊູ ອິນທະຊຸມ 5.000 ກີບ
19. ນາງ ວົງເດືອນ ຈັນທະປັນຍາ 10.000 ກີບ
20. ນາງ ວົງທິບ ສີຫາຈັກ 10.000 ກີບ

21.ທ້າວ ວົງເພັດ ສຸວັນນະວົງ 10.000 ກີບ
22.ນາງ ວົງຄຳ ໄດຍາ 10.000 ກີບ
23.ນາງ ວົງແກ້ວ ສຸວັນນະວົງ 10.000 ກີບ
24.ທ້າວ ວົງໄຊ ສຸວັນນະວົງ 10.000 ກີບ
25.ທ້າວ ວົງສອນ ສຸວັນນະວົງ 10.000 ກີບ
26.ນາງ ລໍອີ້ລານ ພ້ອມຄອບຄົວ 5.000 ກີບ
27.ຍາແມ່ ບຸນນ້ອມ ພ້ອມຄອບຄົວ 6.000 ກີບ
28.ຍາແມ່ຕູ້ໃຫຍ່ ລັບພູນ ຄຳວົງສາ 2.000 ກີບ
29.ຍາແມ່ ອຳພອນ ຄຳວົງສາ 5.000 ກີບ
30.ແມ່ຕູ້ ບົວສີ 2.500 ກີບ
31.ນາງ ແກ້ວພິມພອນ ພ້ອມຄອບຄົວ 6.000 ກີບ
32.ຍາແມ່ ຈັນພອນ 1.000 ກີບ
33.ຍາແມ່ ປ່ອມ ບໍລິຫານ 2.000 ກີບ
34.ນາງ ອ່ອນສາ ບໍລິຫານ 1.000 ກີບ
35.ແມ່ຕູ້ ຄຳ 500 ກີບ
36.ທ່ານ ລັບພູນ ຄຳວົງສາ 6.000 ກີບ
37.ຍາແມ່ ພູຄຳ ຈັນທະສຸກ 2.000 ກີບ
38.ຍາພໍ່ ທອງສິງ ແລະ
ຍາແມ່ ທ່ອນຈັນ ສໍພາບມີໄຊ 10.000 ກີບ
39.ທ.ໄຊມົງຄົນ ແລະ
ນາງ ວິລະວັນ ໄຊຍະສິດເສນາ 10.000 ກີບ
40.ທ.ອໍລະພິມ ອິນທະວົງ ພ້ອມຄອບຄົວ 10.000 ກີບ
41.ນາງ ບົງອອນ ອິນທະວົງ 10.000 ກີບ

42. ນາງ ວັນນີ ແລະ
ທ້າວ ແປງ ສູນດາຣາ 5.000 ກີບ

43. ນາງ ຈັນທອນ ແລະ
ທ້າວ ວິໄນ ອິນທະວົງ 50.000 ກີບ

44. ຄອບຄົວ ທ່ານຄຳເພີຍ ແລະ
ນາງ ຄຳເຣືອງ 50.000 ກີບ

45. ພະແສນເງິນ ບຸດດາລາ 5.000 ກີບ

46. ທ່ານ ອູ່ນ ແລະ ນາງນ້ອຍ 50,000 ກີບ
ຮ້ານຂາຍຄ້າຕະຫລາດເຊົ້າ

47. ຍາແມ່ ອຳພອນ ທ້າວ ຈັນເພັງ 5,000 ກີບ

48 ນາງ ຈັນທະລີ ລາວັນ ຈາກການາດາ 1,000 ກີບ

49 ທ່ານ ທຳ ແລະ ຍາແມ່ ຈອກມະນີ 100.000 ກີບ

50. ທ່ານ ມົງ ອິນທະວົງ 100.000 ກີບ

51. ນາງ ສົມພິດ ອິນທະລັງສີ 1,000 ກີບ

52. ນາງ ທິດາວອນ ພຸດທິວົງສັກ 1,000 ກີບ

FOREWORD

Chanthaboury Srisatanakhanahut (the Capital City of the King of Naga); Vientiane Lan Xang (the Capital City that is as mighty, powerful, strong, sturdy as a million elephants) or (a Capital City that has a million war elephants).

These two name of the Capital City are likely to profoundly impress deeply important meanings upon the hearts of those Lao who are national-minded and who always have an unforgetful national conscience.

These two names are likely to persuade them to reminisce of the glorious past of the Lao Nation, undoubtedly grandly influential and powerful in this Region.

But the turns of events in human societies developed both for the better and for the worse, both in the cruel, barbaric, extremely inhuman directions and in the tender-loving, amiable, wholeheartedly adorable directions--both within the same family, consanguinity and amongst different families and neighboring nations... .

